Public Disclosure Authorized

Disclosure Authorized

Public Disclosure Authorized

ສປປ ລາວ - ແຜນງານຫັນເປັນທັນສະໄໝ ການຄຸ້ມຄອງ ການເງິນພາກລັດ 2016-2018

Lao PDR - Public Finance Management Modernization Program 2016–2018

11 ກັນຍາ 2018

ກົມຄຸ້ມຄອງວຽກບໍລິຫານລັດ
ກົມໃຫຍ່ຄຸ້ມຄອງວຽກຄວາມສະເໝີພາບດ້ານເສດຖະກິດ, ການເງິນ ແລະ ສະຖາບັນ (EFI)
ນະຄອນຫຼວງວຽງຈັນ, ສປປ ລາວ, ພາກພື້ນອາຊີຕາເວັນອອກ ແລະ ປາຊີຟິກ
ທະນາຄານໂລກ

September 11, 2018

World Bank Governance Global Practice
Equity, Finance and Institutions (EFI)
Vientiane, Lao PDR, East Asia and Pacific Region

Financed by EU

WORLD BANK GROUP

Public Disclosure Authorized

ສະຫຼຸບສັງລວມ 9

I. ພາກສະເໜີ 14

ພາບລວມກ່ຽວກັບປະເທດ 14

ການປະຕິຮູບ PFM ຢູ່ ສປປ ລາວ 15

ແຜນງານຫັນເປັນທັນສະໄໝການຄຸ້ມຄອງການເງິນພາກລັດ (PFM) 15

II. ການຈັດຕັ້ງປະຕິບັດກິດຈະກຳຢູ່ພາຍໃຕ້ແຜນງານ 18

ອົງປະກອບ 1: ຍຸດທະສາດການພັດທະນາການເງິນພາກລັດ ແລະ ການປະຕິຮູບອື່ນໃນຂົງເຂດ PFM 19

1.A: ຍຸດທະສາດການພັດທະນາການເງິນພາກລັດຮອດປີ 2025 19

1.B: ການປະເມີນການຄຸ້ມຄອງລາຍຈ່າຍພາກລັດ ແລະ ຄວາມສ່ຽງທາງການເງິນ (PEFA) 21

1.C: ຍຸດທະສາດ ICT ແລະ ຄວາມປອດໄພທາງອິນເຕີເນັດ 21

1.D: ການປະເມີນຂີດຄວາມສາມາດດ້ວຍຕົນເອງຂອງອົງການກວດສອບແຫ່ງລັດ (SAO) 21

ອົງປະກອບ 2: ສະໜັບສະໜຸນການປັບປຸງຂັ້ນຕອນການສ້າງແຜນ ແລະ ການປະຕິບັດງົບປະມານ 22

2.A: ການຊ່ວຍເຫຼືອດ້ານວິຊາການ (TA) ສຳລັບຂັ້ນຕອນການສ້າງແຜນງົບປະມານ 22

2.B: ການປັບປຸງການປະຕິບັດງົບປະມານ ລວມທັງວຽກຄຸ້ມຄອງ, ຄາດຄະເນ ແລະ ລາຍງານກ່ຽວກັບແຫຼ່ງທຶນ 24

2.C: ການທົບທວນແລະປັບປຸງລະບົບຂໍ້ມູນຄັງເງິນແລະງົບປະມານ 25

2.D: ສ້າງຄວາມເຂັ້ມແຂງໃຫ້ສະພາແຫ່ງຊາດ ໃນດ້ານຂັ້ນຕອນການສ້າງແຜນງົບປະມານ 25

ອົງປະກອບ 3: ສະໜັບສະໜຸນນະໂຍບາຍແລະການຄຸ້ມຄອງລາຍຮັບ 26

3.A: ສະເໜີແຕ່ງຕັ້ງ ແລະ ສ້າງຄວາມເຂັ້ມແຂງໃຫ້ໜ່ວຍງານຜູ້ເສຍອາກອນຂະໜາດໃຫຍ່ (LTU) ດ້ວຍການສ້າງຂີດຄວາມສາມາດ 26

3.B: ສະໜັບສະໜຸນການຈັດຕັ້ງປະຕິບັດ VAT 28
ອົງປະກອບ 4: ການສ້າງແຜນປະຕິບັດງານສຳລັບແຜນງານປະຕິຮູບ PFM ແບບຮອບດ້ານ 29
III. ບົດຮຽນທີ່ຖອດຖອນໄດ້ 31
IV. ສະຫຼຸບ ແລະ ບາດກ້າວໃນຕໍ່ໜ້າ 33
ບາດກ້າວໃນຕໍ່ໜ້າ 33

ທີມງານໂຄງການຂໍສະແດງຄວາມຮູ້ບຸນຄຸນເປັນຢ່າງສູງຕໍ່ການສະໜັບສະໜຸນ ແລະ ການຊີ້ນຳຂອງການນຳຂອງກະຊວງການເງິນ ທ່ານນາງ ທິບພະກອນ ຈັນທະວົງສາ ຮອງລັດຖະມົນຕີ ກະຊວງການເງິນ, ຫົວໜ້າຄະນະຊີ້ນຳແຜນງານຫັນເປັນທັນສະໄໝ ການຄຸ້ມຄອງການເງິນພາກລັດ (PFM); ທ່ານ ບຸນໂຈມ ອຸບົນປະເສີດ ຮອງລັດຖະມົນຕີ ກະຊວງການເງິນ; ທ່ານ ອາດສະພັງທອງ ສີພັນດອນ ຮອງລັດຖະມົນຕີກະຊວງການເງິນ; ປອ ບຸນເຫຼືອ ສິນໄຊວໍຣະວົງ ຫົວໜ້າ ກົມນະໂຍບາຍການເງິນແລະນິຕິກຳ; ທ່ານ ສັງວອນ ພັນທະວີໄລ ຫົວໜ້າກົມງົບປະມານ; ທ່ານນາງ ວັນພອນ ພົມມະສອນ ຫົວໜ້າຄັງເງິນແຫ່ງຊາດ; ທ່ານ ພູທະນູເພັດ ໄຊສົມບັດ ຫົວໜ້າກົມສ່ວຍສາອາກອນ; ແລະ ທ່ານ ຂັນທະລີ ວົງໄກສອນ ຫົວໜ້າສະຖາບັນພັດທະນາຂໍ້ມູນຂ່າວສານດ້ານ ການເງິນ. ທີມງານໂຄງການຂໍສະແດງຄວາມຂອບໃຈຕໍ່ພະນັກງານວິຊາການຂອງກະ ຊວງການເງິນທີ່ໃຫ້ການຮ່ວມມື ແລະ ການສະຫຼະເວລາອັນມີຄ່າເພື່ອປະກອບສ່ວນເຂົ້າ ໃນການຈັດຕັ້ງປະຕິບັດໂຄງການ ແລະ; ສະພາແຫ່ງຊາດ: ພະນະ ທ່ານ ປອ ວິໄລວົງ ບຸດດາຄຳ ປະທານກຳມາທິການເງິນ, ແຜນການ ແລະ ກວດສອບ; ທ່ານ ທັນຕາ ກອງຜາລີ ຮອງປະທານກຳມາທິການການເງິນ, ແຜນການ ແລະ ກວດສອບ ພ້ອມດ້ວຍ ພະນັກງານວິຊາການຂອງກຳມາທິການ; ກະຊວງພາຍໃນ: ທ່ານ ສຸວັນນີ ຣັດຕະນະວົງ, ຫົວໜ້າກົມຄຸ້ມຄອງລັດຖະກອນ, ກະຊວງພາຍໃນພ້ອມດ້ວຍພະນັກງານວິຊາການຂອງ ກະຊວງ; ອົງການກວດສອບແຫ່ງລັດ: ທ່ານ ບຸນເລີດ ເທບວົງສາ ຮອງປະທານ ພ້ອມ ດ້ວຍທີມງານວິຊາການຂອງອົງການກວດສອບແຫ່ງລັດ.

ແຜນງານຫັນເປັນທັນສະໄໝການຄຸ້ມຄອງການເງິນພາກລັດ (PFM) ແຫ່ງສາທາລະນະ ລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ຮັບການຈັດຕັ້ງປະຕິບັດ ໂດຍທີມງານຂອງທະນາ ຄານໂລກ ຄື: ທ່ານ Fanny Weiner (ຜູ້ຊ່ຽວຊານອາວຸໂສດ້ານການຄຸ້ມຄອງການ ເງິນພາກລັດ) ແລະ ທ່ານ ໄຊຊະນິດ ວົງວຽງຄຳ (ຜູ້ຊ່ຽວຊານດ້ານການຄຸ້ມຄອງວຽກ ບໍລິຫານລັດ). ທີມງານຊ່ຽວຊານຂອງທະນາຄານໂລກປະກອບດ້ວຍ ທ່ານ William

Dorotinsky (ທີ່ປຶກສາ), ທ່ານ Richard Stern (ຫົວໜ້າຜູ້ຊ່ຽວຊານດ້ານອາກອນ), ທ່ານ Lars Jessen (ຫົວໜ້າຜູ້ຊ່ຽວຊານດ້ານການຄຸ້ມຄອງໜີ້ສິນ), ທ່ານ Suraiya Zannath (ຫົວໜ້າຜູ້ຊ່ຽວຊານດ້ານການຄຸ້ມຄອງການເງິນ), ທ່ານ Evgenij Najdov (ອະດີດນັກເສດຖະສາດອາວຸໂສປະຈຳ ສປປ ລາວ), ທ່ານ Simon Chenjerani (ຜູ້ຊ່ຽວຊານອາວຸໂສດ້ານການຈັດຊື້), ທ່ານ Erwin Ariadharma (ຜູ້ຊ່ຽວຊານອາວຸໂສດ້ານການຄຸ້ມຄອງວຽກບໍລິຫານລັດ), ທ່ານ Martin John Bowen (ກອງເລຂາ PEFA), ທ່ານ Guillaume Brule (ກອງເລຂາ PEFA), ທ່ານ Marcelo Roldan (ພະນັກງານອາວຸໂສດ້ານ IT, ຄວາມປອດໄພ, ຄວາມສ່ຽງ ແລະ ການປະຕິບັດ), ທ່ານ Robert Scrivo (ພະນັກງານອາວຸໂສດ້ານຄວາມປອດໄພຂອງຂໍ້ມູນຂ່າວສານ), ທ່ານ Viet Anh Nguyen (ຜູ້ຊ່ຽວຊານດ້ານການຄຸ້ມຄອງວຽກບໍລິຫານລັດ), ທ່ານ Minh Van Nguyen (ນັກເສດຖະສາດອາວຸໂສ), ທ່ານ ຄຳເພັດ ຈັນວົງນະຣາຊ (ຜູ້ຊ່ຽວຊານດ້ານ ການຈັດຊື້), ທ່ານ ແກ້ວມະນີວອນ ພິມມະຫາໄຊ (ນັກເສດຖະສາດ), ທ່ານ ເຄວິນ ວິເສດ (ນັກວິໄຈຄວາມປອດໄພຂອງຂໍ້ມູນຂ່າວສານ), ທ່ານ Ali Hashim (ທີ່ປຶກສາດ້ານການປະຕິຮູບ IFMIS/PFM), ທ່ານ Michael Engelschalk (ທີ່ປຶກສາດ້ານອາກອນ), ທ່ານ Deepak Bhatia (ທີ່ປຶກສາດ້ານ ICT), ທ່ານ Janis Platais (ທີ່ປຶກສາດ້ານຄັງເງິນ), ທ່ານ Peter Trepte (ທີ່ປຶກສາດ້ານການຈັດຊື້), ທ່ານ Peter Brooke (ທີ່ປຶກສາດ້ານການປະຕິຮູບ PFM), ທ່ານ Sylvie Zaitra (ທີ່ປຶກສາຂອງ PEFA), ທ່ານ Martin Linde (ທີ່ປຶກສາດ້ານຄັງເງິນ), ທ່ານ Lynne McKenzie (ທີ່ປຶກສາດ້ານງົບປະມານ), ທ່ານ Andre Vinck (ທີ່ປຶກສາດ້ານອາກອນ), ທ່ານ Stephan Foessel (ທີ່ປຶກສາດ້ານອາກອນ), ທ່ານ Tomas Sudintas (ທີ່ປຶກສາດ້ານອາກອນ), ທ່ານ Brandon Lundberg (ທີ່ປຶກສາຂອງ PEFA), ທ່ານ Soren Davidsen (ທີ່ປຶກສາດ້ານການປະຕິຮູບເງິນເດືອນ), ທ່ານ Zachary Mills (ທີ່ປຶກສາດ້ານການປະຕິຮູບເງິນເດືອນ), ທ່ານ Robert Buchanan (ທີ່ປຶກສາ SAO), ທ່ານ ດວງປັນຍາ ວໍລະວົງ (ທີ່ປຶກສາດ້ານອາກອນ), ທ່ານ Saurabh Agarwal (ທີ່ປຶກສາດ້ານ ICT), ທ່ານ ປ໋ງ ຮວງຊະນະໄຊ (ທີ່ປຶກສາດ້ານ ICT) ແລະ ທີມງານໃຫ້ຄຳປຶກສາ WYG.

ວຽກຄຸ້ມຄອງບໍລິຫານແລະຈັດຕັ້ງປະຕິບັດແຜນງານ ໄດ້ຮັບການສະໜັບສະໜຸນຈາກ ທ່ານນາງ ສຸຣິຍາຮັກ ສາກົນນິຍົມ (ຜູ້ຊ່ວຍແຜນງານ), ທ່ານນາງ Laura Pineiro, ທ່ານນາງ Anne Boeckmann, ທ່ານນາງ ທິບພາພອນ ຣັດຕະນະວົງ, ທ່ານນາງ ທິບພາພອນ ເລືອນວິໄລ, ທ່ານ Marcelo Buitron (ທີ່ປຶກສາດ້ານການປະຕິບັດງານ) ແລະ ທ່ານນາງ ວຽງມາລາ ພົມແສງສະຫວັນ (ທີ່ປຶກສາດ້ານການຄຸ້ມຄອງໂຄງການ).

ທີມງານໂຄງການຂໍສະແດງຄວາມຮູ້ບຸນຄຸນຕໍ່ ທ່ານນາງ Sally Burningham (ອະດີດຫົວໜ້າຫ້ອງການຜູ້ຕາງໜ້າປະຈຳ ສປປ ລາວ), ທ່ານ Jean-Christophe Carret (ອະດີດຫົວໜ້າຫ້ອງການຜູ້ຕາງໜ້າປະຈຳ ສປປ ລາວ), ທ່ານ Fily Sissoko (ຫົວໜ້າທີມງານວິຊາການດ້ານການຄຸ້ມຄອງວຽກບໍລິຫານລັດປະຈຳພາກພື້ນ), ທ່ານ Robert Taliercio (ອະດີດຫົວໜ້າທີມງານວິຊາການດ້ານການຄຸ້ມຄອງວຽກບໍລິຫານລັດປະຈຳພາກພື້ນ), ທ່ານ Nicola Smithers (ຫົວໜ້າທີມງານວິຊາການດ້ານການຄຸ້ມຄອງວຽກບໍລິຫານລັດປະຈຳພາກພື້ນ ແລະ ອະດີດຫົວໜ້າຜູ້ຊ່ຽວຊານການເງິນພາກລັດ), ທ່ານ Shabih Ali Mohib (ຫົວໜ້າແຜນງານ), ທ່ານ Cem Dener (ຫົວໜ້າຜູ້ຊ່ຽວຊານດ້ານການບໍລິຫານລັດ), ທ່ານ Leah April (ຜູ້ຊ່ຽວຊານອາວຸໂສດ້ານການເງິນພາກລັດ), ທ່ານ ວຽງສະໄໝ ສະຣິດທິຣາດ (ວິຊາການປະຈຳຫ້ອງການຜູ້ຕາງໜ້າ), ແລະ ທ່ານ ນາງ ເພັດ ອຸດົມ (ຜູ້ຊ່ວຍແຜນງານ) ສຳລັບການສະໜັບ ສະໜຸນ ແລະ ຄຳແນະນຳ.

ທີມງານໂຄງການກໍ່ຂໍສະແດງຄວາມຂອບໃຈຜູ້ແທນຂອງສະຫະພາບເອີລົບປະຈຳ ສປປ ລາວ ເປັນຕົ້ນ ພະນະທ່ານ Leon Paul Faber (ເອກອັກຄະ ລັດຖະທູດ), ທ່ານ Bryan Fornari (ຫົວໜ້າຝ່າຍຮ່ວມມື), ທ່ານນາງ Julianna Hyjek (ອຸປະທູດ), ທ່ານ Joachim Debois (ອຸປະ ທູດ), ທ່ານນາງ ຈິນດາວັນ ວົງສາລີ ແລະ ທ່ານ ວັດທະນາ ອັດຕະນາພອນ (ຫົວໜ້າແຜນງານ), ແລະ ທ່ານ Baptiste Mandouze (ທີ່ປຶກສາ PFM ປະຈຳພາກພື້ນ) ສຳລັບການສະໜັບສະໜຸນ ແລະ ຮ່ວມມືທີ່ດີເລີດ.

ຄຳຫຍໍ້

ACH	ສຳນັກງານຫັກບັນຊີແບບອັດຕະໂນມັດ
BoL	ທະນາຄານແຫ່ງ ສປປ ລາວ
CFPA	ກຳມາທິການເງິນ, ແຜນການ ແລະ ກວດສອບ (NA)
CoA	ສາລະບານບັນຊີ
EU	ສະຫະພາບເອີລົບ
FMIS	ລະບົບຂໍ້ມູນຂ່າວສານການຄຸ້ມຄອງການເງິນ
FPLD	ກົມນະໂຍບາຍການເງິນ ແລະ ນິຕິກຳ
GDP	ລວມຍອດຜະລິດຕະພັນພາຍໃນ
GFIS	ລະບົບຂໍ້ມູນຂ່າວສານການເງິນພາກລັດ
GoL	ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ICT	ເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ
IFID	ສະຖາບັນພັດທະນາຂໍ້ມູນຂ່າວສານດ້ານການເງິນ
IMF	ກອງທຶນການເງິນສາກົນ
JICA	ອົງການຮ່ວມມືສາກົນແຫ່ງປະເທດຍີ່ປຸ່ນ
LDC	ປະເທດດ້ອຍພັດທະນາ
LT	ຜູ້ເສຍອາກອນຂະໜາດໃຫຍ່
LTU	ໜ່ວຍງານຜູ້ເສຍອາກອນຂະໜາດໃຫຍ່
MoF	ກະຊວງການເງິນ
MoHA	ກະຊວງພາຍໃນ
MoU	ບົດບັນທຶກຄວາມເຂົ້າໃຈ
NA	ສະພາແຫ່ງຊາດ
NT	ຄັງເງິນແຫ່ງຊາດ
PEFA	ການປະເມີນການຄຸ້ມຄອງລາຍຈ່າຍພາກລັດແລະຄວາມສ່ຽງທາງການເງິນ
PEMNA	ເຄືອຂ່າຍການຄຸ້ມຄອງລາຍຈ່າຍພາກລັດປະຈຳພາກພື້ນອາຊີ
PFM	ການຄຸ້ມຄອງການເງິນພາກລັດ
PrMO	ຫ້ອງການຕິດຕາມການຈັດຊື້
RBA	ການກວດສອບແບບອີງໃສ່ຄວາມສ່ຽງ
RCD	ພະແນກຄຸ້ມຄອງເກັບລາຍຮັບ
SAO	ອົງການກວດສອບແຫ່ງລັດ
SDTF	ກອງທຶນຊ່ວຍເຫຼືອລ້າຝ່າຍດຽວ
TA	ການຊ່ວຍເຫຼືອດ້ານວິຊາການ
TD	ກົມສ່ວຍສາອາກອນ
TF	ກອງທຶນຊ່ວຍເຫຼືອລ້າ
TSA	ບັນຊີຄັງເງິນແຫ່ງຊາດດຽວ
VAT	ອາກອນມູນຄ່າເພີ່ມ

ບົດລາຍງານສະບັບນີ້ສະຫຼຸບຫຍໍ້ກ່ຽວກັບການຈັດຕັ້ງປະຕິບັດກິດຈະກຳພາຍໃຕ້ແຜນງານຫັນເປັນທັນສະໄໝການຄຸ້ມຄອງການເງິນພາກລັດ (PFM). ແຜນງານດັ່ງກ່າວ ໄດ້ໃຫ້ການສະໜັບສະໜຸນດ້ານວິຊາການ, ການວິໄຈ ແລະ ການໃຫ້ຄຳປຶກສາແກ່ລັດຖະບານແຫ່ງສາທາລະນະລັດປະຊາທິປະໄຕປະຊາຊົນລາວ (GoL) ເພື່ອປັບປຸງການຄຸ້ມຄອງການເງິນພາກລັດ (PFM). ແຜນງານນີ້ ໄດ້ຮັບການຈັດຕັ້ງປະຕິບັດແຕ່ເດືອນມັງກອນ 2016 ເຖິງ ເດືອນ ກໍລະກົດ 2018 ໂດຍທະນາຄານໂລກ (WB) ແລະ ໄດ້ຮັບການ ສະໜັບສະໜຸນທຶນຈາກສະຫະພາບເອີລົບ (EU).

ສະຖານະພາບຂອງລະບົບ PFM ຢູ່ ສປປ ລາວ

ກົດໝາຍວ່າດ້ວຍງົບປະມານປີ 2015 ກຳນົດຫຼັກການກ່ຽວກັບຮອບວຽນການສ້າງແຜນງົບປະມານ ແລະ ການສ້າງເອກະສານ ງົບປະມານ ແຕ່ກົດໝາຍຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດຢ່າງຄົບຖ້ວນເທື່ອ. ປັດຈຸບັນການຮ່າງນິຕິກຳລຸ່ມກົດໝາຍ ແລະ ເອກະສານ ງົບປະມານທີ່ກ່ຽວຂ້ອງ ຍັງບໍ່ທັນສຳເລັດເທື່ອ, ສະນັ້ນຈຶ່ງບໍ່ສາມາດກຳນົດລາຍຈ່າຍໃຫ້ແທດເໝາະ ຫຼື ບໍ່ສາມາດນຳໃຊ້ເພ ດານລາຍຈ່າຍງົບປະມານ. ມີຂອບລາຍຈ່າຍໄລຍະກາງ ແຕ່ປັດຈຸບັນການສ້າງແຜນງົບປະມານແມ່ນອີງໃສ່ແຜນງົບປະມານຂອງປີ ຜ່ານມາ.

ການປະຕິຮູບໃນໄລຍະຜ່ານມາໃນດ້ານການນຳໃຊ້ບັນຊີລວມສູນຄັງເງິນແຫ່ງຊາດ (TSA) ແລະ ການສົມທຽບບັນຊີກັບທະນາ ຄານຍັງບໍ່ສຳເລັດສົມບູນເທື່ອ. ໃນຂະນະທີ ທະນາຄານແຫ່ງ ສປປ ລາວ (BoL) ແລະ ທະນາຄານທຸລະກິດໄດ້ສະໜອງຂໍ້ມູນປະຈຳວັນກ່ຽວກັບດຸນບັນຊີ ແລະ ທຸລະກຳປະຈຳວັນຂອງບັນຊີທັງໝົດທີ່ຢູ່ພາຍໃຕ້ການຄວບຄຸມຂອງຄັງເງິນແຫ່ງຊາດ (NT) ແຕ່ດຸນບັນຊີກໍ່ຍັງບໍ່ທັນຖືກສັງລວມເຂົ້າໃນບັນຊີດຽວ ໃນເວລາປິດບັນຊີປະຈຳວັນ.

ການປັບປຸງສາລະບານບັນຊີຄັງເງິນ (CoA) ໄດ້ເປັນບາດກ້າວສຳລັບການຮັບຮອງລະບົບການລົງບັນຊີຄູ່ ຊຶ່ງເຮັດໃຫ້ສາມາດສ້າງເອກະສານລາຍງານການເງິນທີ່ສອດຄ່ອງຕາມມາດຕະຖານສາກົນກ່ຽວກັບການບັນຊີການເງິນພາກລັດ (IPSAS). ຍັງມີບັນຫາສຳຄັນຄ້າງຄາຢູ່ ເປັນຕົ້ນການຂາດການຈັດປະເພດລາຍຈ່າຍຕາມອົງການຈັດຕັ້ງແບບຄົບຊຸດ ລວມທັງລະຫັດເມືອງຢູ່ໃນ CoA. ດັ່ງນັ້ນ, ຈຶ່ງບໍ່ສາມາດແບ່ງແຜນງົບປະມານໃຫ້ໜ່ວຍງານງົບປະມານຂອງຂະແໜງການຕ່າງໆຢູ່ຂັ້ນເມືອງ ແລະ ບໍ່ສາມາດ ກວດກາການປະຕິບັດລາຍຈ່າຍ ທຽບໃສ່ ແຜນງົບປະມານ ກ່ອນການຈັດຕັ້ງປະຕິບັດ.

ການຄຸ້ມຄອງແລະການຄາດຄະເນແຫຼ່ງທຶນຍັງຢູ່ໃນຂັ້ນເລີ່ມຕົ້ນ. ໃນຂະນະທີ່ການຕິດຕາມກະແສແຫຼ່ງທຶນຕ່າງປະເທດແມ່ນອີງໃສ່ ເອກະສານລາຍງານຖານະການເງິນຂອງທະນາຄານປະຈຳອັນຈາກ BoL ແລະ ທະນາຄານທຸລະກິດ ແຕ່ NT ຍັງມີຂໍ້ມູນຈຳກັດ ກ່ຽວກັບຄວາມຮຽກຮ້ອງຕ້ອງການດ້ານລາຍຈ່າຍແລະການຄາດຄະເນລາຍຮັບທີ່ຈະເກີດຂຶ້ນໃນຕໍ່ໜ້າ. ດັ່ງນັ້ນ, NT ຈຶ່ງດຳເນີນງານ ໂດຍອີງໃສ່ຮອບວຽນແຫຼ່ງທຶນປະຈຳອາທິດ. ຍ້ອນຂາດກົນໄກຄວບຄຸມພັນທະສັນຍາລາຍຈ່າຍ, ໂດຍບໍ່ມີການຢັ້ງຢືນວ່າພັນທະສັນຍາລາຍຈ່າຍເຫຼົ່ານັ້ນມີໃນແຜນງົບປະມານຫຼືບໍ່ ອົງການພາກລັດທີ່ປະຕິບັດໂຄງການຈຶ່ງກໍ່ໜີ້ຄ້າງຈ່າຍ.

ປັດຈຸບັນ ລະບົບ GFIS ບໍ່ມີຊຸດຄຳສັ່ງຈຳເປັນພື້ນຖານຄົບຖ້ວນເພື່ອເຮັດໃຫ້ລະບົບປະຕິບັດງົບປະມານໄດ້ຢ່າງເຕັມສ່ວນ. ຍັງບໍ່ທັນມີຊຸດຄຳສັ່ງຈຳນວນໜຶ່ງທີ່ຕິດພັນກັບການຄວບຄຸມພັນທະສັນຍາລາຍຈ່າຍແລະການສົມທຽບບັນຊີທະນາຄານ ແລະ ບັນດາຫ້ອງການຢູ່ຂັ້ນເມືອງບໍ່ທັນຖືກເຊື່ອມຕໍ່ເຂົ້າໃນລະບົບ GFIS. ລະບົບ GFIS ມີຂໍ້ຈຳກັດທາງເຕັກນິກເພື່ອຍົກລະດັບໃຫ້ເປັນລະບົບທີ່ມີຊຸດຄຳສັ່ງພື້ນຖານຄົບຖ້ວນ ແລະ ດຳເນີນງານໄດ້ຢ່າງສົມບູນ. MoF ໄດ້ສ້າງຍຸດທະສາດເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ການສື່ສານ (ICT) ຊຶ່ງມີການປະເມີນສະຖານະພາບໃນປັດຈຸບັນກ່ຽວກັບແວດລ້ອມ ແລະ ສະຖາປະນິກດ້ານ ICT ຂອງ MoF ຢ່າງຮອບດ້ານ ແລະ ສະເໜີໃຫ້ນຳໃຊ້ຂະບວນການທີ່ທັນສະໄໝແລະໂປ່ແກຣມ ICT, ການຍົກລະດັບເຕັກໂນໂລຊີແລະສະຖາປະນິກ ແລະ ການຂະຫຍາຍຂີດຄວາມສາມາດດ້ານ ICT.

ສະພາແຫ່ງຊາດ (NA) ໄດ້ຜ່ານກົດໝາຍວ່າດ້ວຍການຈັດຊື້ດ້ວຍນຳໃຊ້ທຶນຂອງລັດໃນເດືອນພະຈິກ 2017, ຈາກນັ້ນ GoL ໄດ້ ເລີ່ມສ້າງຂອບການຄຸ້ມຄອງແລະນິຕິກຳກ່ຽວກັບການຈັດຊື້ທີ່ເຂັ້ມແຂງ. ນັບແຕ່ປີ 2004 ເປັນຕົ້ນມາ ວຽກງານຈັດຊື້ພາກລັດແມ່ນປະຕິບັດຕາມດຳລັດຂອງນາຍົກລັດຖະມົນຕີ ແລະ ຫ້ອງການຕິດຕາມການຈັດຊື້ (PrMO) ທີ່ຢູ່ພາຍໃຕ້ MoF ເປັນໜ່ວຍງານຕິດຕາມວຽກງານຈັດຊື້ພາກລັດ. ການຈັດຕັ້ງປະຕິບັດດຳລັດທີ່ບໍ່ຮັດກຸມກໍ່ໃຫ້ເກີດຊ່ອງວ່າງທີ່ຜູ້ຮັບເໝົາສະເໜີຈັດຕັ້ງປະຕິບັດໂຄງການຈຳນວນໜຶ່ງນອກແຜນ ໂດຍສະເພາະຢູ່ໃນຂະແໜງກໍ່ສ້າງ. ກຳລັງມີການຮ່າງນິຕິກຳຈັດຕັ້ງປະຕິບັດກົດໝາຍໃໝ່ ແລະ ພາຍຫຼັງ ມີການສ້າງຂີດຄວາມສາມາດໃນປີ 2019 ແລ້ວ ຄາດວ່າຈະມີການຮັບຮອງຂອບນິຕິກຳການຈັດຊື້ໃໝ່ໃນປີ 2020.

ເພື່ອກ້າວສູ່ແລະໃຫ້ສອດຄ່ອງກັບການປະຕິບັດສາກົນ, ກົມສ່ວຍສາອາກອນ (TD) ໄດ້ສ້າງຕັ້ງພະແນກຄຸ້ມຄອງການເກັບລາຍຮັບ (RCD) ທີ່ຮັບຜິດຊອບການຄຸ້ມຄອງການປະຕິບັດພັນທະອາກອນຂອງທຸລະກິດຂະໜາດໃຫຍ່. ຜູ້ເສຍອາກອນຂະໜາດໃຫຍ່ (LTs) ທີ່ຄຸ້ມຄອງໂດຍ RCD ໃນປັດຈຸບັນໄດ້ປະກອບສ່ວນປະມານ 40 ເປີເຊັນຂອງລາຍຮັບອາກອນທັງໝົດ, ຊຶ່ງເປັນອັດຕາ ສ່ວນທີ່ຂ້ອນຂ້າງຕ່ຳ ທຽບກັບ ມາດຕະຖານສາກົນ. ນີ້ຊີ້ໃຫ້ເຫັນວ່າ ດ້ວຍລະບົບການຕິດຕາມທີ່ມີເປົ້າໝາຍແລະມີປະສິດທິພາບຕໍ່ການປະຕິບັດພັນທະ, ອາດຈະສາມາດເພີ່ມການເກັບອາກອນຈາກຜູ້ເສຍອາກອນກຸ່ມນີ້ໄດ້.

ສິ່ງທ້າທາຍລວມຕໍ່ການປັບປຸງລະບົບ PFM ມີຄື ຂາດຂໍ້ມູນທີ່ໜ້າເຊື່ອຖືສຳລັບການຕິດຕາມ, ການວິໄຈດ້ານນະໂຍບາຍ ແລະ ການຕັດສິນໃຈ ແລະ ມີຄວາມສາມາດຈຳກັດໃນບາງຂົງເຂດ. ຂໍ້ມູນ (ທັງດ້ານການເງິນ ແລະ ດ້ານອື່ນໆ) ແມ່ນເກັບໄວ້ໃນລະບົບຂອງໃຜລາວຢູ່ນຳບັນດາກົມກອງລັດ, ຂາດວິທີການ ຫຼື ຂັ້ນຕອນທີ່ຈະແຈ້ງໃນການແລກປ່ຽນແລະສັງລວມຂໍ້ມູນ. ຂໍ້ມູນ-ສະຖິຕິຖືກ ເກັບໄວ້ເປັນຮູບແບບເອກະສານເທົ່ານັ້ນ ແລະ ມີຢູ່ນຳກົມດຽວ.

ສະໜັບສະໜຸນຍຸດທະສາດການພັດທະນາການເງິນພາກລັດ 2025 ແລະ ວິໄສທັດ 2030

MoF ໄດ້ດຳເນີນບາດກ້າວທຳອິດທີ່ມີຄວາມສຳຄັນເພື່ອສ້າງຍຸດທະສາດການພັດທະນາການເງິນພາກລັດ 2025 ແລະ ວິໄສທັດ 2030 (ຍຸດທະສາດ PFM) ຊຶ່ງຖືກຮັບຮອງໃນເດືອນກໍລະກົດ 2017. ຍຸດທະສາດດັ່ງກ່າວຍັງປະກອບມີແຜນປະຕິບັດງານສຳລັບການຈັດຕັ້ງປະຕິບັດໄລຍະທຳອິດ 2018–2020 ແລະ ນອກນັ້ນກໍ່ຍັງລວມເອົາແຜນປະຕິບັດງານທີ່ໂດຍທົ່ວໄປຖືວ່າເປັນເງື່ອນ ໄຂຕໍ່ໜ້າສຸດຂອງລະບົບແກນກາງຂອງ PFM ເຊັ່ນ: (a) ຂອບນິຕິກຳທີ່ຈຳເປັນພື້ນຖານ, (b) ລະບົບການບັນຊີທີ່ດີ ແລະ ຂັ້ນຕອນ ປະຕິບັດງົບປະມານຜ່ານລະບົບລວມສູນຄັງເງິນ, (c) ຂະບວນການສ້າງແຜນງົບປະມານທີ່ເໝາະສົມກັບຄວາມເປັນຈິງ ແລະ (d) ສຳຄັນທີ່ສຸດ ລະບົບຂໍ້ມູນຂ່າວສານການຄຸ້ມຄອງການເງິນ (FMIS).

ການຊ່ວຍເຫຼືອພາຍໃຕ້ແຜນງານ PFM ໄດ້ສຸມໃສ່ການຊ່ວຍເຫຼືອດ້ານວິຊາການ (TA) ແລະ ການສ້າງຂີດຄວາມສາມາດ ຕະຫຼອດ ຮອດ ການເກັບກຳຂໍ້ມູນກ່ຽວກັບລະບຽບຂັ້ນຕອນປັດຈຸບັນຂອງ PFM. ໃນດ້ານລາຍຈ່າຍ, ບັນດາກິດຈະກຳລວມມີ (a) ການໃຫ້ຄຳແນະນຳກ່ຽວກັບການສ້າງແຜນງົບປະມານ, ໂດຍສະເພາະບັນດາບາດກ້າວໃນຕໍ່ໜ້າໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍງົບ ປະມານສະບັບປັບປຸງປີ 2015; (b) TA ແລະ ແຜນປະຕິບັດງານການຄຸ້ມຄອງຄັງເງິນແລະແຫຼ່ງທຶນ; (c) ການທົບທວນລະບົບ GFIS ປັດຈຸບັນ ແລະ ການກະກຽມໂຄງການ FMIS ໃໝ່; ແລະ (d) ການຮ່າງຄຳແນະນຳຈັດຕັ້ງປະຕິບັດກົດໝາຍວ່າດ້ວຍການ ຈັດຊື້ດ້ວຍທຶນຂອງລັດສະບັບໃໝ່. ໃນດ້ານລາຍຮັບ, ໄດ້ໃຫ້ການສະໜັບສະໜຸນດ້ານ (a) ນະໂຍບາຍອາກອນ ເຊັ່ນ: ກົດໝາຍວ່າດ້ວຍ ອມພ ສະບັບປັບປຸງ ແລະ ບາດກ້າວໃນຕໍ່ໜ້າໃນການຈັດຕັ້ງປະຕິບັດ, ແລະ (b) ການປັບປຸງໜ່ວຍງານຄຸ້ມຄອງຜູ້ເສຍອາ ກອນຂະໜາດໃຫຍ່ (LTU) ໂດຍມີຄຳແນະນຳກ່ຽວກັບການກຳນົດຄຸນລັກສະນະຂອງ LT ແລະ ຕົວຊີ້ວັດຄວາມສ່ຽງສຳລັບການຄັດເລືອກການກວດກາອາກອນ. ແຜນງານຍັງໄດ້ສະໜັບສະໜຸນການປະເມີນການຄຸ້ມຄອງລາຍຈ່າຍພາກລັດແລະຄວາມສ່ຽງທາງ ການເງິນ (PEFA) ທີ່ກຳລັງດຳເນີນຢູ່. ມີການສ້າງເອກະສານວິຊາການ, ບົດລາຍງານຂອງຄະນະຜູ້ຊ່ຽວຊານ ແລະ ແຜນປະຕິບັດງານ

ປະມານ 40 ສະບັບ ແລະ ໄດ້ຈັດກອງປະຊຸມປຶກສາຫາລືຈຳນວນ 20 ຄັ້ງໃຫ້ພາກລັດ ໂດຍມີຄະນະຜູ້ຊ່ຽວຊານມາເຮັດຢູ່ ສປປ ລາວ ຫຼາຍກວ່າ 40 ຄັ້ງ.

ກະຊວງການເງິນແມ່ນຂະແໜງການຕົ້ນຕໍຈັດຕັ້ງປະຕິບັດແຜນງານດັ່ງກ່າວ ແລະ ກຳມາທິການການເງິນ ແຜນການແລະກວດສອບ, ອົງການກວດສອບແຫ່ງລັດ ແລະ ກະຊວງພາຍໃນມີສ່ວນຮ່ວມໃນການປະຕິບັດແຜນງານໃນບາງຂົງເຂດ ຄື: ການຊ່ວຍເຫຼືອດ້ານວິຊາການ ແລະ ການສ້າງຂີດຄວາມສາມາດ. ລັດຖະກອນຂອງການຈັດຕັ້ງທີ່ມີສ່ວນຮ່ວມຈັດຕັ້ງປະຕິບັດແຜນງານໄດ້ຮັບໂອກາດແລະປະໂຫຍດຈາກບັນດາກິດຈະກຳ ເຊັ່ນ: ການຝຶກອົບຮົມຕາມໜ້າວຽກ ແລະ ການຝຶກອົບຮົມແລະກອງປະຊຸມວິຊາການຫົວຂໍ້ສະເພາະ.

ພາບລວມກ່ຽວກັບປະເທດ

1. ສປປ ລາວ ບັນລຸການເຕີບໂຕໄວ ແລະ ການຫຼຸດຜ່ອນຄວາມທຸກຍາກໄດ້ຢ່າງໜ້າປະທັບໃຈຕະຫຼອດສອງທົດສະວັດຜ່ານມາ. ອັດຕາການເຕີບໂຕສະເລ່ຍຂອງລວມຍອດຜະລິດຕະພັນພາຍໃນ (GDP) ປະຈຳປີປະມານ 8 ເປີເຊັນ ນັບແຕ່ປີ 2000 ເປັນຕົ້ນມາ ຊຶ່ງເຮັດໃຫ້ ສປປ ລາວ ເປັນໜຶ່ງໃນປະເທດທີ່ມີການເຕີບໂຕໄວທີ່ສຸດຢູ່ພາກພື້ນອາຊີຕາເວັນອອກແລະປາຊີຟິກ. ລວມ ຍອດລາຍໄດ້ແຫ່ງຊາດ (GNI) ຕໍ່ຫົວຄົນບັນລຸໄດ້ US$2,330 ໃນປີ 2017 ແລະ ປີ 2018 ເປັນຄັ້ງທຳອິດທີ່ ສປປ ລາວ ປະຕິບັດ ໄດ້ຕາມເງື່ອນໄຂສຳລັບການຫຼຸດພົ້ນຈາກສະຖານະພາບປະເທດດ້ອຍພັດທະນາ (LDC)[1]. ເຖິງຢ່າງໃດກໍ່ຕາມ, ຕົວຊີ້ວັດດ້ານການ ພັດທະນາສັງຄົມແມ່ນຫຼຸດຄາດໝາຍ ແລະ ຄວາມບໍ່ເທົ່າທຽມກັນມີການຂະຫຍາຍກວ້າງອອກ ຊຶ່ງສຳປະສິດ Gini ມີການເພີ່ມຂຶ້ນ (ປັດຈຸບັນຢູ່ທີ່ 36.2) ສະທ້ອນໃຫ້ເຫັນວ່າ 40 ເປີເຊັນລຸ່ມສຸດຂອງປະຊາກອນທັງໝົດ ໄດ້ຮັບຜົນປະໂຫຍດຕ່ຳຈາກການເຕີບໂຕ.

2. ປະເທດໄດ້ພະຍາຍາມສູງໃນການແກ້ໄຂການຂາດດຸນງົບປະມານ ຊຶ່ງເປັນສິ່ງທ້າທາຍກົດດັນຕໍ່ການຄຸ້ມຄອງເສດຖະກິດ. ໄດ້ມີຄວາມພະຍາຍາມຫຼຸດການຂາດດຸນງົບປະມານດ້ວຍມາດຕະການຫຼຸດຜ່ອນການເພີ່ມເງິນເດືອນແລະການບັນຈຸພະນັກງານໃໝ່ ແລະ ຕັດລາຍຈ່າຍ. ປະເທດຢູ່ໃນສະພາວະຄວາມກົດດັນດ້ານໜີ້ສິນສາທາລະນະສູງ ຊຶ່ງມີຢູ່ປະມານ 60 ເປີເຊັນຂອງ GDP ໃນປີ 2017 ແລະ ຄາດວ່າຈະເພີ່ມຂຶ້ນຮອດ 62.6 ເປີເຊັນຂອງ GDP ໃນປີ 2018. ການຂາດດຸນງົບປະມານຫຼາຍຫຼຸດຄວາມສາມາດ ຂອງພາກລັດໃນການແບ່ງແຜນງົບປະມານໃຫ້ຂະແໜງການຂອງລັດ ແລະ ການບຳລຸງຮັກສາພື້ນຖານໂຄງລ່າງທີ່ຈຳເປັນເພື່ອແກ້ ໄຂສິ່ງທ້າທາຍດ້ານການພັດທະນາຂອງປະເທດ; ຂະແໜງການທີ່ມີຄວາມສຳຄັນຫຼາຍຍັງໄດ້ຮັບການສະໜອງງົບປະມານບໍ່ພຽງພໍ.

[1] ຢູ່ໃນການທົບທວນໃນເດືອນມີນາ 2018, ປະເທດສາມາດບັນລຸມາດຖານຕ່ຳສຸດສຳລັບ GNI ຕໍ່ຫົວຄົນ ແລະ ດັດສະນີຊັບພະຍາກອນມະນຸດ. ຖ້າຫາກ ຍັງຮັກສາຄວາມຄືບໜ້າໄດ້ຈົນຮອດການທົບທວນປີ 2021, ຈະມີການສະເໜີໃຫ້ອອກຈາກສະຖານະດ້ອຍພັດທະນາ ຫຼັງຈາກໄລຍະຂ້າມຜ່ານສາມປີໃນປີ 2024.

3. ສປປ ລາວ ມີການປົກຄອງ ໂດຍພັກປະຊາຊົນປະຕິວັດລາວ (LPRP). ໃນປີ 2016, ລັດຖະບານໄດ້ປະກາດແຜນງານ ການປະຕິຮູບແບບຮອບດ້ານ ເພື່ອແກ້ໄຂສິ່ງທ້າທາຍ ດ້ານການບໍລິຫານ, ສົ່ງເສີມຫຼັກນິຕິທຳ ແລະ ປັບປຸງການຄຸ້ມຄອງເສດຖະກິດ. ອີງຕາມ ວິໄສທັດການພັດທະນາສີຂຽວ ຈຸດປະສົງຂອງແຜນພັດທະນາເສດຖະກິດ - ສັງຄົມແຫ່ງ ຊາດຄັ້ງທີ VIII 2016–2020 ຂອງລັດຖະບານ (NSEDP) ແມ່ນການຫຼຸດຜ່ອນ ຄວາມທຸກຍາກ ແລະ ກະກຽມໃຫ້ ສປປ ລາວ ຫຼຸດພົ້ນອອກຈາກສະຖານະພາບ LDC ຮອດປີ 2024 ແລະ ກ້າວໄປສູ່ເປົ້າໝາຍການພັດທະນາແບບຍືນຍົງ.

ການປະຕິຮູບ PFM ຢູ່ ສປປ ລາວ

4. ໃນລະຫວ່າງປີ 2003 ແລະ 2012 ລັດຖະບານແຫ່ງ ສປປ ລາວ (GoL) ໄດ້ດຳ ເນີນການປະຕິຮູບເພື່ອສ້າງຄວາມເຂັ້ມ ແຂງໃຫ້ແກ່ພາກລັດ ແລະ ລະບົບການຄຸ້ມຄອງ ການເງິນພາກລັດ (PFM). ເຖິງຢ່າງໃດກໍ່ຕາມ ໃນປີ 2012 ການປ່ຽນແປງຈາກປັດໄຈ ພາຍນອກ ແລະ ພາຍໃນ ລວມທັງ ນະໂຍບາຍການຮ່ວມມືກັບຜູ້ໃຫ້ທຶນຂອງລັດຖະບານ ສົ່ງຜົນກະທົບຕໍ່ການຈັດຕັ້ງປະຕິບັດ ການປະຕິຮູບ. ຫຼັງຈາກການແຕ່ງຕັ້ງລັດຖະບານ ຊຸດປັດຈຸບັນໃນປີ 2016 ໄດ້ມີການພິຈາລະນາຄືນການຮ່ວມມືກັບບັນດາ ຜູ້ໃຫ້ທຶນ ແລະ ໄດ້ລິເລີ່ມການກະກຽມ ‘ການປະຕິຮູບໄລຍະທີສອງ’ ຊຶ່ງນຳໄປສູ່ການສ້າງຍຸດທະສາດ ການພັດທະນາການເງິນພາກລັດ 2025 ແລະ ວິໄສທັດ 2030 (ຍຸດທະສາດ PFM) ຊຶ່ງຖືກຮັບຮອງໃນເດືອນ ກໍລະກົດ 2017. ຍຸດທະສາດດັ່ງກ່າວມີຈຸດປະສົງເພື່ອສ້າງ ຄວາມເຂັ້ມແຂງການເງິນພາກລັດ ເພື່ອປະກອບສ່ວນເຂົ້າໃນການສ້າງສະຖຽນລະພາບ ແລະ ເຮັດໃຫ້ການເຕີບໂຕດ້ານເສດຖະກິດ ຂະຫຍາຍຕົວຢ່າງຕໍ່ເນື່ອງ ແລະ ໝັ້ນຄົງ ແລະ ຫຼຸດພົ້ນອອກຈາກສະຖານະພາບ LDC.

ແຜນງານຫັນເປັນທັນສະໄໝການຄຸ້ມຄອງການເງິນພາກລັດ (PFM)

5. ແຜນງານຫັນເປັນທັນສະໄໝການຄຸ້ມຄອງການເງິນພາກລັດ (PFM) ໄດ້ຮັບການ ຈັດຕັ້ງປະຕິບັດໂດຍທະນາຄານໂລກ ແລະ ສະໜັບສະໜຸນທຶນທັງໝົດໂດຍສະຫະພາບ ເອີລົບ (EU) ໂດຍຜ່ານກອງທຶນຊ່ວຍເຫຼືອລ້າຝ່າຍດຽວ (SDTF) ໃນມູນຄ່າ €2 ລ້ານ. ແຜນງານດັ່ງກ່າວແໜໃສ່ສະໜັບສະໜຸນຄວາມພະຍາຍາມຂອງ GoL ໃນການຫັນເປັນ

ທັນສະໄໝ PFM ໂດຍສະໜອງ ການຊ່ວຍເຫຼືອດ້ານວິຊາການ, ການວິໃຈ ແລະ ການໃຫ້ຄຳແນະນຳ. ບັນດາກິດຈະກຳຂອງແຜນງານໄດ້ເລີ່ມຕົ້ນໃນເດືອນມັງກອນ 2016 ແລະ ສິ້ນສຸດໃນເດືອນກໍລະກົດ 2018. ບັນດາກິດຈະກຳໄດ້ສຸມໃສ່ການຊ່ວຍເຫຼືອດ້ານວິຊາການ (TA) ແລະ ການສ້າງຂີດ ຄວາມສາມາດ ຕະຫຼອດຮອດ ການເກັບກຳຂໍ້ມູນ ກ່ຽວກັບລະບຽບຂັ້ນຕອນການດຳເນີນງານໃນປັດຈຸບັນຂອງລະບົບ PFM. ແຜນງານ ດັ່ງກ່າວໄດ້ສ້າງເອກະສານວິຊາການ, ບົດລາຍງານຂອງຄະນະຜູ້ຊ່ຽວຊານ ແລະ ແຜນປະຕິບັດງານ ປະມານ 40 ສະບັບໃຫ້ແກ່ພາກລັດ ຈາກການມາເຮັດວຽກຂອງຄະນະຜູ້ຊ່ຽວຊານ 40 ຄັ້ງ ຢູ່ ສປປ ລາວ.

ຮູບສະແດງ 1: ພາບລວມຂອງແຜນງານ



6. ກະຊວງການເງິນ (MoF) ແມ່ນຂະແໜງການຕົ້ນຕໍຈັດຕັ້ງປະຕິບັດແຜນງານດັ່ງກ່າວ ແລະ ກົມມາທິການເງິນ ແຜນການ ແລະກວດສອບ (CFPA) ຂອງ NA ແລະ SAO ກໍໄດ້ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດກິດຈະກຳສະເພາະ ເຊັ່ນ: ການຊ່ວຍເຫຼືອດ້ານວິຊາການ ແລະ ການສ້າງຂີດຄວາມສາມາດ.

7. ເພື່ອເປັນການຕິດຕາມການຈັດຕັ້ງປະຕິບັດແຜນງານ ໄດ້ມີການແຕ່ງຕັ້ງຄະນະຊີ້ນຳແຜນງານ (SC) ຂຶ້ນ ໂດຍການເປັນ ປະທານຂອງທ່ານຮອງລັດຖະມົນຕີກະຊວງການເງິນ ແລະ ປະກອບດ້ວຍບັນດາຫົວໜ້າກົມຂອງ MoF ທີ່ກ່ຽວຂ້ອງກັບແຜນງານ (ເປັນຕົ້ນກົມນະໂຍບາຍການເງິນແລະນິຕິກຳ, ກົມສ່ວຍສາອາກອນ (TD); ຄັງເງິນແຫ່ງຊາດ (NT) ແລະ ສະຖາບັນພັດທະນາຂໍ້ ມູນຂ່າວສານດ້ານການເງິນ [IFID]). ໃນໄລຍະການຈັດຕັ້ງປະຕິບັດແຜນງານດັ່ງກ່າວ, ພະນັກງານວິຊາການຂອງບັນດາໜ່ວຍງານທີ່ມີສ່ວນຮ່ວມໃນການຈັດຕັ້ງປະຕິບັດແຜນງານໄດ້ເພີ່ມຄວາມຮູ້ຈາກການເຂົ້າຮ່ວມໃນບັນດາກິດຈະກຳການຝຶກອົບຮົມແບບການປະຕິບັດວຽກຕົວຈິງ ແລະ ກອງປະຊຸມປຶກສາຫາລື ແລະ ກອງປະຊຸມວິຊາການ. ລະຫວ່າງໄລຍະຂອງແຜນງານໄດ້ມີການຈັດຝຶກອົບຮົມ ຈຳນວນ 19 ຄັ້ງ ໂດຍມີຜູ້ເຂົ້າຮ່ວມທັງໝົດ 550 ຄົນ. ເພື່ອສະແດງໃຫ້ເຫັນຜົນກະທົບດ້ານບົດບາດຍິງຊາຍໄດ້ມີການເກັບ ກຳຂໍ້ມູນກ່ຽວກັບເພດທີ່ເຂົ້າຮ່ວມກອງປະຊຸມ ວິຊາການ ແລະ ການຝຶກອົບຮົມ ຊຶ່ງເລີ່ມຕົ້ນມາແຕ່ເດືອນທັນວາ 2017. ສະຖິຕິສະແດງໃຫ້ເຫັນວ່າ 42 ເປີເຊັນຂອງຜູ້ເຂົ້າຮ່ວມເປັນເພດຍິງ.

II ການຈັດຕັ້ງປະຕິບັດກິດຈະກຳຢູ່ພາຍໃຕ້ແຜນງານ

8. ໃນສອງປີຜ່ານມາ, ການຈັດຕັ້ງປະຕິບັດແຜນງານເພື່ອສະໜັບສະໜຸນ GoL ໄດ້ສຸມໃສ່ການສ້າງຖານຄວາມຮູ້ກ່ຽວກັບ ການປະຕິບັດແລະຂະບວນການຕ່າງໆໃນປັດຈຸບັນ ຂອງ PFM ໃນຮູບແບບຂອງວຽກວິໄຈແບບເລັ່ງລັດແລະຄຳແນະນຳ. ດັ່ງທີ່ ໄດ້ກ່າວມາ ຂ້າງເທິງນັ້ນແລ້ວ ຍັງມີການສ້າງຂີດຄວາມສາມາດ ແລະ ການຝຶກອົບຮົມໃນຂົງເຂດທີ່ ກ່ຽວຂ້ອງຂອງ PFM ລວມທັງ ການແລກປ່ຽນປະສົບການຢູ່ຕ່າງປະເທດ. ແຜນງານນີ້ ແບ່ງອອກເປັນ 4 ອົງປະກອບຫຼັກ ຄື: 1) ຍຸດທະສາດພັດທະນາການເງິນພາກລັດ ແລະ ການປະຕິຮູບອື່ນໃນຂົງເຂດ PFM, 2) ການສະໜັບສະໜຸນການປັບປຸງຂັ້ນຕອນ ການສ້າງແຜນແລະການປະຕິບັດງົບປະມານ, 3) ການສະໜັບສະໜຸນນະໂຍບາຍ ແລະ ການຄຸ້ມຄອງອາກອນ ແລະ 4) ການສ້າງແຜນປະຕິບັດງານແບບຮອບດ້ານສຳລັບການ ປະຕິຮູບ PFM.

ຮູບສະແດງ 2: ບັນດາກິດຈະກຳຂອງແຜນງານທີ່ປະຕິບັດໂດຍອົງການຈັດຕັ້ງ ພາກລັດ 2016–2018



ອົງປະກອບ 1: ຍຸດທະສາດການພັດທະນາການເງິນພາກລັດ ແລະ ການປະຕິຮູບອື່ນໃນຂົງເຂດ PFM

1.A: ຍຸດທະສາດການພັດທະນາການເງິນພາກລັດຮອດປີ 2025

9. 'ຍຸດທະສາດການພັດທະນາການເງິນພາກລັດຮອດປີ 2025 ແລະ ວິໄສທັດຮອດປີ 2030' (ຍຸດທະສາດ PFM) ໄດ້ສ້າງ ສຳເລັດ ແລະ ລົງລາຍເຊັນໂດຍນາຍົກລັດຖະມົນຕີໃນເດືອນກໍລະກົດ 2017 ແລະ ຖືກເຜີຍແຜ່ດ້ວຍຮູບການຈັດກອງປະຊຸມປຶກສາຫາລືດ້ານວິຊາການກັບບັນດາກົມຂອງ MoF ແລະ ບັນດາກະຊວງອ້ອມຂ້າງແລະຜູ້ໃຫ້ທຶນ. ການຈັດຕັ້ງປະຕິບັດຍຸດທະສາດ PFM ຈະຖືກກຳນົດເປັນໄລຍະ ແລະ ຕາມຂັ້ນຕອນ (ເບິ່ງຢູ່ ຮູບສະແດງ 3).

ຮູບສະແດງ 3: ວິທີການແບບເປັນໄລຍະ



10. ເພື່ອສະໜັບສະໜຸນການກະກຽມໄລຍະທຳອິດເພື່ອສ້າງລະບົບຕົ້ນຕໍຂອງ PFM, ແຜນ ງານນີ້ໄດ້ຊ່ວຍໃນການກະກຽມ ແຜນຈັດຕັ້ງປະຕິບັດການປະຕິຮູບ ໂດຍກຳນົດໜ້າວຽກພື້ນຖານສຳລັບລະບົບແກນກາງຂອງ PFM ຢູ່ ສປປ ລາວ (ເບິ່ງຢູ່ ໜ້າ 1).

ຫ້ອງ 1: ໜ້າວຽກພື້ນຖານສຳລັບລະບົບແກນກາງຂອງ PFM ຢູ່ ສປປ ລາວ

- ຂອບກົດໝາຍສຳລັບລະບົບແກນກາງຂອງ PFM ສ່ວນໃຫຍ່ແມ່ນມີຢູ່ແລ້ວ ແຕ່ຍັງຂາດ/ຕ້ອງປັບປຸງນິຕິກຳລຸ່ມກົດໝາຍ.
- ລະບົບຄັງເງິນແຫ່ງຊາດຂອງ MoF ຄວນເຊື່ອມຕໍ່ໂດຍກົງກັບລະບົບການຊຳລະແຫ່ງຊາດ ໂດຍຜ່ານລະບົບຊຳລະສະສາງບັນຊີແບບ ອັດຕະໂນມັດ (ACH).
- ເພື່ອບັນທຶກທຸລະກຳການການປະຕິບັດລາຍຈ່າຍທັງໝົດນັ້ນ ມີຄວາມຈຳເປັນທີ່ຈະຕ້ອງໃຫ້ຫ້ອງການຄັງເງິນແຫ່ງຊາດທັງໝົດ (ຂັ້ນ ສູນກາງ, ແຂວງ, ເມືອງ) ເຂົ້າເຖິງລະບົບຄຸ້ມຂອງຂໍ້ມູນຂ່າວສານການເງິນ.
- ຈຳເປັນຕ້ອງມີການປັບປຸງສາລະບານບັນຊີຄັງເງິນ (CoA) ສະບັບປັດຈຸບັນ ເພື່ອໃຫ້ສອດຄ່ອງກັບການປ່ຽນແປງດ້ານນິຕິກຳໃນໄລ ຍະຫຼັງ ແລະ ດັດປັບໃຫ້ໄດ້ ມາດຕະຖານ ເຊັ່ນ: ມາດຕະຖານສາກົນກ່ຽວກັບການບັນຊີແ ຫ່ງລັດ (IPSAS) ແລະ ສຳລັບລະບົບລາຍ ງານຂອງ IMF.
- ການສ້າງກະແສຂໍ້ມູນປົກກະຕິກ່ຽວກັບການສ້າງແຜນ ແລະ ຄວາມຮຽກ ຮ້ອງຕ້ອງການແຫຼ່ງທຶນລະຫວ່າງຫົວໜ່ວຍງົບປະມານ, ກົມຄຸ້ມຄອງການ ເກັບລາຍຮັບ ແລະ NT.
- ຈຳເປັນຕ້ອງມີຄະນະຄຸ້ມຄອງແຫຼ່ງທຶນ, ຄູ່ມືຄຸ້ມຄອງແຫຼ່ງທຶນແລະລະບຽບ ຂັ້ນຕອນອື່ນໆໃນການກຳນົດເງື່ອນໄຂ ແລະ ຂັ້ນຕອນຕ່າງໆ ເພື່ອອຳນວຍ ຄວາມສະດວກການຄຸ້ມຄອງແຫຼ່ງທຶນທີ່ດີຂອງລັດຖະບານ.
- ການນຳໃຊ້ເພດານລາຍຈ່າຍງົບປະມານ.

11. ເນື່ອງຈາກມີການປ່ຽນແປງຫຼາຍຢ່າງຢູ່ບັນດາກະຊວງ ແລະ ກົມທີ່ກ່ຽວຂ້ອງກັບ ການ ຈັດຕັ້ງປະຕິບັດການປະຕິຮູບ PFM ໄດ້ມີການເລີ່ມຕົ້ນການກະກຽມແຜນງານການຄຸ້ມ ຄອງການປ່ຽນແປງ (ການສຶກສາອົບຮົມແນວຄິດ-ວິຊາການເພື່ອຮັບຮອງການຫັນເປັນ

ທັນສະໄໝ). ກອງປະຊຸມວິຊາການເບື້ອງຕົ້ນທີ່ໄດ້ຈັດຂຶ້ນໃນເດືອນກໍລະກົດ 2018 ແມ່ນ ມີຈຸດປະສົງຕົ້ນຕໍເພື່ອນຳສະເໜີແນວຄວາມຄິດດ້ານການຄຸ້ມຄອງການປ່ຽນແປງ ແລະ ຜົນການປ່ຽນແປງທີ່ຈະເກີດຂຶ້ນໃນອະນາຄົດສຳລັບພະນັກງານລັດທີ່ກ່ຽວຂ້ອງ.

1.B: ການປະເມີນການຄຸ້ມຄອງລາຍຈ່າຍພາກລັດແລະຄວາມສ່ຽງທາງການເງິນ (PEFA)

12. PEFA ເປັນເຄື່ອງມືສຳລັບການປະເມີນສະຖານະພາບຂອງລະບົບ PFM ແລະ ສະໜອງການວິໄຈກ່ຽວກັບຜົນການ ຈັດຕັ້ງປະຕິບັດ PFM ແບບຮອບຄອບ, ສອດຄ່ອງ ແລະ ອີງໃສ່ຫຼັກຖານ ໃນໄລຍະເວລາໃດໜຶ່ງຂອງໄລຍະແຜນງານການປະຕິຮູບ. ຈຸດປະ ສົງຂອງ PEFA 2018 ແມ່ນເພື່ອສະໜອງພາບລວມກ່ຽວກັບລະບົບ PFM ໃນ ສປປ ລາວ ແລະ ກຳນົດຫຼັກເຄົ້າເພື່ອ ວັດແທກຄວາມຄືບໜ້າການປະຕິຮູບ PFM ຂອງ MoF ໃນຊຸມປີຕໍ່ໜ້າ.

1.C: ຍຸດທະສາດ ICT ແລະ ຄວາມປອດໄພທາງອິນເຕີເນັດ

13. IFID ຂອງ MoF ມີພາລະບົດບາດໃນການສ້າງລະບົບ ICT ເພື່ອຫັນເປັນທັນສະ ໄໝວຽກງານການເງິນພາກລັດສຳລັບ MoF. ເພື່ອເປັນສ່ວນໜຶ່ງຂອງການຫັນເປັນທັນ ສະໄໝແວດລ້ອມດ້ານ ICT ຂອງ MoF, ໄດ້ມີການປະເມີນລະບົບພື້ນຖານໂຄງລ່າງ ແລະ ການຄຸ້ມຄອງຄວາມປອດໄພດ້ານເຕັກໂນໂລຊີຂໍ້ມູນຂ່າວສານໃນເດືອນມີນາ 2017. ບົດລາຍງານການປະເມີນໄດ້ສັງລວມເອົາບັນດາຂົງເຂດທີ່ຕ້ອງເອົາໃຈໃສ່ຢູ່ໃນຍຸດທະ ສາດ ICT.

1.D: ການປະເມີນຂີດຄວາມສາມາດດ້ວຍຕົນເອງຂອງອົງການກວດສອບແຫ່ງລັດ (SAO)

14. ສຳລັບການສະໜັບສະໜຸນສຳລັບ SAO, ໄດ້ມີການດຳເນີນການປະເມີນຂີດຄວາມ ສາມາດດ້ວຍຕົນເອງໃນເດືອນມີນາ 2016 ຊຶ່ງການປະເມີນດັ່ງກ່າວລະບຸ 4 ຂົງເຂດ (ເບິ່ງຢູ່ຫ້ອງ 2 ສຳລັບຜົນການປະເມີນຕົ້ນຕໍ).

ຫ້ອງ 2: ຜົນການປະເມີນຂີດຄວາມສາມາດດ້ວຍຕົນເອງຂອງ SAO

- SAO ມີຄວາມຄືບໜ້າທີ່ດີໃນການສ້າງຂີດຄວາມສາມາດດ້ານສະຖາບັນຂອງຕົນ.
- ຍັງບໍ່ສາມາດດຳເນີນການກວດສອບຖານະການເງິນປະຈຳປີໃຫ້ຄົບທຸກອົງການຈັດຕັ້ງລັດໃນແຕ່ລະປີຕາມຄວາມຮັບຜິດຊອບທາງດ້ານກົດໝາຍເທື່ອ.
- ໄດ້ເລີ່ມນຳໃຊ້ມາດຕະຖານສາກົນຂອງສະຖາບັນການກວດສອບສູງສຸດ (ISSAI) ເຂົ້າໃນວິທີການກວດສອບຂອງ SAO.
- SAO ມີຄວາມຄືບໜ້າທີ່ດີໃນການພັດທະນາຂີດຄວາມສາມາດດ້ານການສ້າງແຜນຊັບພະຍາກອນມະນຸດ ແລະ ຜົນຂະຫຍາຍເປັນ ອຽກບັນຈຸພະນັກງານແລະການຝຶກອົບຮົມ.

ອົງປະກອບ 2: ສະໜັບສະໜຸນການປັບປຸງຂັ້ນຕອນການສ້າງແຜນ ແລະ ການປະຕິບັດງົບປະມານ

2.A: ການຊ່ວຍເຫຼືອດ້ານວິຊາການ (TA) ສຳລັບຂັ້ນຕອນການສ້າງແຜນງົບປະມານ

15. ກົດໝາຍວ່າດ້ວຍງົບປະມານປີ 2015 ໄດ້ກຳນົດຫຼັກການກ່ຽວກັບການສ້າງແຜນ ແລະ ເອກະສານງົບປະມານ; ແຕ່ບັນດາບົດບັນຍັດຂອງກົດໝາຍດັ່ງກ່າວຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດຢ່າງຄົບຖ້ວນເທື່ອ. ເຖິງວ່າຈະມີຂອບລາຍຈ່າຍໄລຍະກາງຢູ່ກໍ່ຕາມ, ແຕ່ການສ້າງແຜນງົບປະມານແມ່ນຍັງອີງໃສ່ແຜນງົບປະມານຂອງປີຜ່ານມາ. ແຜນງານດັ່ງກ່າວນີ້ໄດ້ສະໜອງ TA ເພື່ອຊ່ວຍ MoF ແລະ ໂດຍສະເພາະກົມງົບປະມານ ໃນການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍງົບປະມານແຫ່ງລັດສະບັບປັບປຸງ ຊຶ່ງສະໜອງຄຳແນະນຳສຳລັບການຮ່າງນິຕິກຳລຸ່ມກົດໝາຍ ແລະ ສະເໜີແຜນຈັດຕັ້ງປະຕິບັດກົດໝາຍວ່າດ້ວຍງົບປະມານແຫ່ງລັດ (ເບິ່ງຢູ່ຫ້ອງ 3 ສຳລັບແນວທາງການປະຕິບັດ).

ຫ້ອງ 3: ສະເໜີແຜນປະຕິຮູບວຽກງານສ້າງແຜນງົບປະມານ

- ສ້າງຕັ້ງໜ່ວຍງານຮັບຜິດຊອບການປະຕິຮູບ
- ສ້າງເອກະສານນະໂຍບາຍການເງິນ/ແຜນງົບປະມານ ແລະ ນຳໃຊ້ເອກະສານແຜນງົບປະມານທີ່ໄດ້ການປັບປຸງ
- ຫັນໄປໃຊ້ການສ້າງແຜນງົບປະມານຕາມຖານລາຍຈ່າຍ ແທນການສ້າງແຜນງົບປະມານແບບອີງໃສ່ແຜນງົບປະມານປີຜ່ານມາ
- ກຳນົດເພດານລາຍຈ່າຍງົບປະມານໃຫ້ຫົວໜ່ວຍງົບປະມານ
- ທົດລອງໃຊ້ເອກະສານນະໂຍບາຍການເງິນ/ແຜນງົບປະມານຢູ່ບາງແຂວງ ແລະ ກະຊວງ

16. ແບບຈຳລອງຄາດຄະເນແຜນລາຍຈ່າຍບ້ອງເງິນເດືອນຄິດໄລ່ລາຍຈ່າຍເງິນເດືອນສຳລັບໄລຍະຫ້າປີ ແລະ ອາດຈະນຳມາ ໃຊ້ເພື່ອຈຳລອງການປະຕິບັດນະໂຍບາຍລາຍຈ່າຍຕ່າງໆ ລວມທັງ ການປ່ຽນແປງພື້ນຖານເງິນເດືອນ, ດັດຊະນີເງິນເດືອນ, ເງິນນະໂຍບາຍ-ອຸດໜູນ, ຈຳນວນພະນັກງານ ແລະ ນະໂຍບາຍອື່ນໆ. ຈຸດປະສົງຂອງການໃຊ້ແບບຈຳລອງດັ່ງກ່າວແມ່ນເພື່ອຊ່ວຍໜ່ວຍງານພາກລັດທີ່ກ່ຽວຂ້ອງຮັບປະກັນໃຫ້ລາຍຈ່າຍບ້ອງເງິນເດືອນມີຄວາມຍືນຍົງດ້ານການເງິນ ແລະ ສະໜອງຂໍ້ຄວາມສາມາດດ້ານການວິໄຈທີ່ດີກວ່າ ເພື່ອສະໜັບສະໜຸນການວາງແຜນກຳລັງແຮງງານ. ແບບຈຳລອງສະບັບທຳອິດໄດ້ຮັບການພັດທະນາຂຶ້ນມາ, ໄດ້ຈັດຝຶກອົບຮົມ ແລະ ມີການປະກອບຄຳຕ່ຳແບບຈຳລອງຈາກຝ່າຍທີ່ກ່ຽວຂ້ອງຂັ້ນສູນກາງ. ແບບຈຳລອງສະບັບປັດຈຸບັນກວມເອົາພຽງແຕ່ຂໍ້ມູນຈາກພາກລັດຢູ່ຂັ້ນສູນກາງເທົ່ານັ້ນ ຊຶ່ງກວມເອົາພຽງແຕ່ປະມານ 20 ເປີເຊັນຂອງຈຳນວນລັດຖະກອນທັງໝົດ.

2.B: ການປັບປຸງການປະຕິບັດງົບປະມານ ລວມທັງ ວຽກຄຸ້ມຄອງ, ຄາດຄະເນ ແລະ ລາຍງານກ່ຽວກັບແຫຼ່ງທຶນ

17. ການປັບປຸງວຽກງານນີ້ໃນໄລຍະຜ່ານມາໄດ້ຮັບຜົນທີ່ໜ້າເພິ່ງພໍໃຈ, ແຕ່ຍັງຂາດບາງ ອົງປະກອບສຳຄັນເພື່ອເຮັດໃຫ້ການ ປະຕິບັດງົບປະມານມີປະສິດທິພາບ. ການຕິດຕາມ ກະແສແຫຼ່ງທຶນຕົວຈິງໃນປັດຈຸບັນແມ່ນອີງໃສ່ເອກະສານລາຍງານຖານະການ ເງິນປະຈຳ ວັນຈາກ BoL ແລະ ທະນາຄານທຸລະກິດ, ແຕ່ NT ມີຂໍ້ມູນຈຳກັດກ່ຽວກັບຄວາມ ຮຽກຮ້ອງຕ້ອງການດ້ານລາຍຈ່າຍ ແລະ ການຄາດຄະເນລາຍຮັບທີ່ຈະເກີດຂຶ້ນໃນຕໍ່ໜ້າ. ເພາະສະນັ້ນ NT ຈຶ່ງຕິດຕາມແຫຼ່ງທຶນຕາມຮອບວຽນເປັນອາທິດ. ການປັບ ປຸງ CoA ຄັ້ງຜ່ານມາໄດ້ກຳນົດຍາດກ້າວການຮັບຮອງລະບົບການລົງບັນຊີຄູ່. ໜ້າວຽກໄລຍະສັ້ນ/ ກາງປະກອບດ້ວຍການໄກເຊື່ອມຕໍ່ລະບົບການຊຳລະແບບເອເລັກໂຕຣນິກລະຫວ່າງ NT ແລະ BoL. ກ່ຳລະນີຂາດການເຊື່ອມຕໍ່ລະຫວ່າງ MoF ແລະ ຂະແໜງທະ ນາຄານເຮັດ ໃຫ້ຫຼາຍທຸລະກຳປະຕິບັດເປີກຖອນເປັນເງິນສົດ ແລະ NT ບໍ່ສາມາດສັງລວມບັນຊີເງິນ ສົດປະຈຳວັນຂອງລັດຖະບານຢ່າງຄົບຖ້ວນ.

18. ຄຳແນະນຳອື່ນໆລວມມີ ການປະຕິຮູບດ້ານການບັນຊີ ແລະ ການຈັດຕັ້ງປະຕິບັດ CoA ສະບັບປັບປຸງ ຕະຫຼອດຮອດ ການປັບປຸງລະບົບ GFIS. ລະບົບ GFIS ທີ່ MoF ນຳໃຊ້ໃນປັດຈຸບັນຖືກພັດທະນາຂຶ້ນມາເອງພາຍໃນກາງຊຸມປີ 1990 ແລະ ຖືກປັບປຸງ ກາງຊຸມປີ 2000. ການປັບປຸງລະບົບ GFIS ພຽງເລັກນ້ອຍ ເຊັ່ນ: ການເຊື່ອມຕໍ່ກັບ ລະບົບປ່ຽນສັ່ງຂໍ້ມູນລາຍຈ່າຍ ແບບເອເລັກໂຕຣນິກ (e-payments gateway) ຈະຊ່ວຍໃຫ້ NT ສ້າງຂໍ້ມູນໄດ້ຢ່າງທັນການ, ຖືກຕ້ອງ ແລະ ສົມບູນຫຼາຍຂຶ້ນ ເພື່ອລາຍ ງານການນຳ ແລະ ເພື່ອຈຸດປະສົງດ້ານຄວາມຮັບຜິດຊອບ. ອີກຂໍ້ສະເໜີໜຶ່ງກໍ່ຄື ການນຳໃຊ້ ການຄາດຄະເນກະແສແຫຼ່ງທຶນທີ່ເນັ້ນໃສ່ດຸນແຫຼ່ງທຶນຂອງ NT ແລະ ການສ້າງຕັ້ງຄະນະ ຄຸ້ມຄອງແຫຼ່ງທຶນ. ເພື່ອສະໜັບສະໜຸນການຈັດຕັ້ງປະຕິບັດຂໍ້ສະ ເໜີຂ້າງເທິງ, ໄດ້ຈັດ ການຝຶກອົບຮົມດ້ວຍການເຮັດວຽກຕົວຈິງແບບເລັ່ງລັດແລະກອງປະຊຸມວິຊາການສຳ ລັບທີມງານວິຊາການ ຂອງ NT ແລະ ໄດ້ສ້າງຮ່າງຄູ່ມືການຄຸ້ມຄອງແຫຼ່ງທຶນ.

2.C: ການທົບທວນແລະປັບປຸງລະບົບຂໍ້ມູນຄັງເງິນແລະງົບປະມານ

19. ໃນເດືອນກັນຍາ 2016 ການທົບທວນຊຸດຄຳສັ່ງຂອງ GFIS ໃນປັດຈຸບັນພົບວ່າ ມັນກວມເອົາຊຸດຄຳສັ່ງບໍ່ຄົບຊຸດ ຊຶ່ງ ເປັນເລື້ອງຈຳເປັນເພື່ອໃຫ້ລະບົບເຮັດໜ້າທີ່ປະຕິບັດ ງົບປະມານໄດ້ຢ່າງເຕັມສ່ວນ. ນອກນັ້ນ, ໃນດ້ານວິຊາການລະບົບ GFIS ມີຂີດຄວາມ ສາມາດຈຳກັດທີ່ຈະລວມເອົາການປັບປຸງທີ່ຕ້ອງການເພື່ອໃຫ້ລະບົບເຮັດໜ້າທີ່ໄດ້ ຢ່າງເຕັມສ່ວນ. ອີງຕາມການທົບທວນ ດັ່ງກ່າວ, GoL ຕັດສິນໃຈວ່າ ລະບົບຄຸ້ມຄອງຂໍ້ ມູນຂາວສານການເງິນພາກລັດ (FMIS) ໃໝ່ ໂດຍໃຊ້ລະບົບຊ່ອບແວມາດຕະຖານສຳ ເລັດຮູບ (COTS) ຈະເປັນລະບົບທີ່ເໝາະສົມທີ່ສຸດເພື່ອປ່ຽນແທນລະບົບ GFIS ໃນປັດ ຈຸບັນ. ເພື່ອເປັນການກະກຽມ ສຳລັບການສ້າງລະບົບ FMIS ໃໝ່ ໄດ້ມີສ້າງບົດລາຍ ງານຫຼາຍສະບັບ ໂດຍໃຫ້ຄຳແນະນຳກ່ຽວກັບຂອບດ້ານກົດໝາຍ ແລະ ການອອກແບບ ລະບົບແລະຂໍ້ກຳນົດມາດຕະຖານເຕັກນິກສຳລັບລະບົບ e-payments gateway ແລະ web portal. ຈາກການພິຈາລະນາຂອງລັດຖະບານທີ່ຈະປ່ຽນແທນລະບົບ GFIS ໃນປັດຈຸບັນ ດ້ວຍລະບົບ FMIS ໃໝ່ນັ້ນ ໄດ້ມີການໄປທັດສະນະສຶກສາເພື່ອແລກປ່ຽນ ປະສົບການຢູ່ປະເທດກຳປູເຈຍໃນເດືອນສິງຫາ 2017. ການແລກປ່ຽນປະສົບການດັ່ງ ກ່າວກຳນົດໄດ້ພື້ນຖານ ທີ່ໜັກແໜ້ນດ້ານນະໂຍບາຍ, ສະຖາບັນ ແລະ ເງື່ອນໄຂດ້ານຊັບ ພະຍາກອນມະນຸດ ເພື່ອລິເລີ່ມການຈັດຕັ້ງປະຕິບັດລະບົບ FMIS ໃໝ່.

2.D: ສ້າງຄວາມເຂັ້ມແຂງໃຫ້ສະພາແຫ່ງຊາດ ໃນດ້ານຂັ້ນຕອນການສ້າງແຜນ ງົບປະມານ

20. ແຜນງານນີ້ໄດ້ສະໜອງ TA ໃຫ້ CFPA ຂອງ NA ສຳລັບການຈັດຕັ້ງປະຕິບັດມາດຕາ 55 ຂອງກົດໝາຍວ່າດ້ວຍງົບ ປະມານແຫ່ງລັດ. ຜູ້ຊ່ຽວຊານທະນາຄານໂລກໄດ້ສຶກ ສາພາລະບົດບາດຂອງ CFPA ພົບເຫັນຈຸດດີແລະຂໍ້ຄົງຄ້າງໃນດ້ານຂີດ ຄວາມສາມາດ ແລະ ການດຳເນີນງານຂອງ CFPA ເພື່ອປະຕິບັດພາລະບົດບາດຂອງຕົນທີ່ຕິດພັນກັບ ມາດຕາ 55 ຂອງກົດໝາຍວ່າດ້ວຍງົບປະມານແຫ່ງລັດສະບັບປັບປຸງ (ເບິ່ງຫ້ອງ 4 ສຳລັບ ຄຳແນະນຳ).

ຫ້ອງ 4: ຄຳແນະນຳ: ການປັບປຸງຢູ່ໃນຂະບວນການຕິດຕາມງົບປະມານ ໂດຍ CFPA

- ກຳນົດພາລະບົດບາດ, ຄວາມຮັບຜິດຊອບ ແລະ ສິດຂອງ CFPA ແລະ ການປະສານງານກັບຂັ້ນລັດຖະບານ, ໂດຍສະເພາະ MoF
- ສ້າງບົດແນະນຳ ແລະ ຄູ່ມືປະຕິບັດງານກ່ຽວກັບໜ້າທີ່ຂອງ CFPA ແລະ ກົມວິຊາການ
- ແບ່ງພາລະບົດບາດຂອງບັນດາກົມຢູ່ພາຍໃນ CFPA ເພື່ອປະຕິບັດໜ້າທີ່ ຂອງໜ່ວຍງານຕິດຕາມຊີ້ນຳວຽກເສດຖະກິດ-ການຄຶກຄອງ ແລະ ໜ່ວຍ ງານຕິດຕາມຊີ້ນຳວຽກງານການບັນຊີ-ກວດສອບ (PAC)
- ສ້າງບົດບັນທຶກຄວາມເຂົ້າໃຈ (MoU) ລະຫວ່າງ CFPA ແລະ SAO
- ສ້າງ MoU ລະຫວ່າງ CFPA ແລະ ອົງການກວດກາລັດຖະບານ

21. ໄດ້ຈັດກອງປະຊຸມວິຊາການ 5 ຄັ້ງ ເພື່ອແລກປ່ຽນຄວາມຮູ້ກັບສະມາຊິກ CFPA ໃນຫົວຂໍ້ກ່ຽວກັບການຄຸ້ມຄອງໜີ້ ສິນສາທາລະນະ, ການຕິດຕາມຊີ້ນຳການປະຕິບັດງົບ ປະມານ, ພາບລວມກ່ຽວກັບເສດຖະກິດ ແລະ ສິ່ງທ້າທາຍດ້ານການພັດທະນາຂອງ ສປປ ລາວ, ການຄຸ້ມຄອງການລົງທຶນຂອງລັດ (PIM), ການບໍລິຫານອາກອນ ແລະ ການເກັບອາກອນ ແລະ ການຈັດຊື້ ດ້ວຍທຶນຂອງລັດ. ນອກນັ້ນ, ຜູ້ຕາງໜ້າຂອງ NA ຍັງຖືກເຊີນໃຫ້ເຂົ້າຮ່ວມກອງປະຊຸມວິຊາການຫຼາຍຄັ້ງ ທີ່ຈັດໃຫ້ MoF ແລະ ເຂົ້າຮ່ວມ ການທັດສະນະສຶກສາກ່ຽວກັບການຈັດຕັ້ງປະຕິບັດ FMIS ແລະ ການປະຕິຮູບ PFM ຢູ່ກຳປູເຈຍ.

ອົງປະກອບ 3: ສະໜັບສະໜູນນະໂຍບາຍແລະການຄຸ້ມຄອງລາຍຮັບ

3.A: ສະເໜີແຕ່ງຕັ້ງ ແລະ ສ້າງຄວາມເຂັ້ມແຂງໃຫ້ໜ່ວຍງານຜູ້ເສຍອາກອນຂະໜາດ ໃຫຍ່ (LTU) ດ້ວຍການສ້າງຂີດຄວາມສາມາດ

22. ການເກັບລາຍຮັບໄດ້ຫຼຸດລົງໃນຊຸມປີຜ່ານມາ (ສາເຫດຕົ້ນຕໍແມ່ນຍ້ອນລາຍຮັບຂອງ

ຂະແໜງບໍ່ແຮ່ຫຼຸດລົງ) ແລະ ລາຍ ຮັບເປັນອັດຕາສ່ວນ GDP ຂອງ ສປປ ລາວ ໃນປັດຈຸ ບັນຢູ່ທີ່ 17.3 ເປີເຊັນ. ໂດຍສະເພາະການເກັບອາກອນລາຍໄດ້ຢູ່ລະດັບຂ້ອນຂ້າງຕ່ຳ. ໃນ ປັດຈຸບັນ GoL ກຳລັງມີມາດຕະການເພື່ອປັບປຸງຂອບນິຕິກຳດ້ານອາກອນ ດ້ວຍການປັບ ປຸງກົດໝາຍວ່າດ້ວຍ ອມພ ແລະໃນຂະນະນີ້ ກຳລັງປັບປຸງກົດໝາຍວ່າດ້ວຍອາກອນຊົມ ໃຊ້ ແລະ ກົດໝາຍວ່າດ້ວຍການບໍລິຫານອາກອນ.

23. ໂດຍທົ່ວໄປຜູ້ເສຍອາກອນໃນອັດຕາສ່ວນນ້ອຍປະກອບສ່ວນລາຍຮັບໃນອັດຕາສ່ວນ ສູງ ຊຶ່ງຢູ່ຫຼາຍໆປະເທດກວມເອົາ ປະມານ 70 ເປີເຊັນ (ໂດຍສະເພາະ ຜູ້ເສຍອາກອນຂະ ໜາດໃຫຍ່). ດັ່ງນັ້ນ ລັດຖະການສ່ວຍສາອາກອນຢູ່ຫຼາຍປະເທດ ຈຶ່ງສ້າງຕັ້ງ LTU ພິເສດ ຂຶ້ນມາເພື່ອປັບປຸງການຕິດຕາມ ແລະ ເພີ່ມການປະຕິບັດພັນທະແບບສະໝັກໃຈຂອງຜູ້ ເສຍອາກອນກຸ່ມນີ້. ຢູ່ ສປປ ລາວ, ພະແນກຄຸ້ມຄອງເກັບລາຍຮັບ (RCD) ຢູ່ກົມສ່ວຍ ສາອາກອນໄດ້ຮັບມອບໝາຍໃຫ້ຕິດຕາມການປະຕິບັດພັນທະຂອງ LT ແລະ ໃນປັດຈຸ ບັນຄຸ້ມຄອງຜູ້ເສຍອາກອນຂະໜາດໃຫຍ່ຫຼາຍກວ່າ 500 ຫົວໜ່ວຍ. ການວິໄຈເບື້ອງ ຕົ້ນສະແດງໃຫ້ເຫັນວ່າ ຢູ່ ສປປ ລາວ ໃນປີ 2017 ຜູ້ເສຍອາກອນຂະໜາດໃຫຍ່ສຸດ 10 ອັນດັບປະກອບສ່ວນ 66 ເປີເຊັນຂອງຈຳນວນອາກອນທັງໝົດທີ່ເກັບຈາກທຸລະ ກິດຂະໜາດໃຫຍ່ທັງໝົດ ແລະ ຜູ້ເສຍອາກອນໃຫຍ່ສຸດ 50 ອັນດັບກວມເອົາເກືອບ 90 ເປີເຊັນຂອງຈຳນວນລາຍ ຮັບທັງໝົດທີ່ເກັບຈາກ LT. ອັດຕາສ່ວນດັ່ງກ່າວເພີ່ມຂຶ້ນ ເປັນເກືອບ 95 ເປີເຊັນ ຕໍ່ຜູ້ເສຍອາກອນໃຫຍ່ສຸດ 100 ອັນດັບພາຍໃຕ້ການຄຸ້ມຄອງຂອງ RCD ແລະ ຮອດ 97 ເປີເຊັນສຳລັບທຸລະກິດໃຫຍ່ສຸດ 200 ອັນດັບ. ນີ້ສະແດງ ໃຫ້ເຫັນວ່າ, ຕາມຫຼັກການແລ້ວຜົນການເກັບລາຍຮັບຂອງ RCD ຈະບໍ່ສົ່ງຜົນກະທົບດ້ານ ລົບ ດ້ວຍການຫຼຸດຈຳນວນທຸລະກິດທີ່ຄຸ້ມຄອງໂດຍ RCD ລົງເຄິ່ງໜຶ່ງ. ໃນການວິໄຈ ຂັ້ນທີສອງ, ໄດ້ນຳໃຊ້ບັນທັດຖານທີ່ຍອມຮັບກັນທົ່ວໄປສຳລັບການກຳນົດກຸ່ມ LT ເຊັ່ນ: ລາຍຮັບທຸລະກິດ ແລະ/ຫຼື ມູນຄ່າຊັບສິນຂອງທຸລະກິດສຳລັບບໍລິສັດໃນຂະແໜງຍຸດທະ ສາດ (ໄຟຟ້ານ້ຳຕົກ, ບໍ່ແຮ່, ທະນາຄານ) ເພື່ອປະເມີນວ່າ RCD ຄວນຕິດຕາມຜູ້ເສຍອາ ກອນປະເພດໃດ (ສຳລັບຂໍ້ສະຫຼຸບຂອງບົດລາຍງານ, ເບິ່ງຢ່ ຫ້ອງ 5). ການນຳໃຊ້ບັດ ທັດຖານດັ່ງກ່າວກັບກຸ່ມຜູ້ເສຍ ອາກອນປັດຈຸບັນທີ່ຢູ່ພາຍໃຕ້ RDC ສະແດງໃຫ້ເຫັນວ່າ ຕ້ອງຕິດຕາມ LT 288 ຫົວໜ່ວຍ.

ຫ້ອງ 5: ຄຳແນະນຳສຳລັບບັນທັດຖານການຄັດເລືອກ LT

- ເພີ່ມພື້ນຖານລາຍຮັບຕ່ຳສຸດຈາກປັດຈຸບັນ 5 ຕື້ກີບ (US$600,000) ເປັນ 20 ຕື້ກີບ (US$2.4 ລ້ານ).
- ດັດປັບນິຍາມກ່ຽວກັບຂະແໜງຍຸດທະສາດ ໄປສູ່ ຂະແໜງທີ່ມີຄວາມສຳຄັນສູງດ້ານການຄຸ້ມຄອງລາຍຮັບ ແລະ ມີການດຳເນີນ ທຸລະກິດທີ່ມີຄວາມສະຫຼັບຊັບຊ້ອນສູງ ເປັນຕົ້ນ (a) ຂະແໜງການເງິນ (ທະນາຄານ ແລະ ບໍລິສັດປະກັນໄພ), (b) ຂະແໜງໂທລະ ຄົມ, ແລະ (c) ຂະແໜງໄຟຟ້າ/ ພະລັງງານໄຟຟ້າ.
- ເພີ່ມບັນທັດຖານຂອງ LT ເຊັ່ນ: (a) ການປະກອບສ່ວນຕໍ່ລາຍຮັບອາກອນ, (b) ມູນຄ່າຊັບສິນຂອງທຸລະກິດ ແລະ (c) ທຸລະກິດ ຕ່າງປະເທດ.

24. ກິດຈະກຳທີສອງສຳລັບການປັບປຸງການປະຕິບັດພັນທະຂອງ LT ແມ່ນການສ້າງ ວິທີການ ແລະ ແບບຈຳລອງທີ່ອີງໃສ່ ຄວາມສ່ຽງ. RBA ຕາມປົກກະຕິຖືກນຳມາໃຊ້ເປັນ ເຄື່ອງມືສຳລັບການຄຸ້ມຄອງການປະຕິບັດພັນທະ ແລະ ການຄັດເລືອກເອົາກໍລະນີສຳລັບ ການກວດສອບອາກອນ. ອີງຕາມກ່ຽວກັບບັນທັດຖານຄວາມສ່ຽງ, ແບບຈຳລອງ RBA ສາ ມາດຈັດບຸລິມະສິດແລະອັນດັບ ຜູ້ເສຍອາກອນດ້ວຍຄວາມສ່ຽງອາກອນປະເພດຕ່າງໆ ແລະ ສຸມໃສ່ກຳລັງຂອງຕົນໃສ່ຜູ້ເສຍອາກອນທີ່ມີຄວາມສ່ຽງສູງສຸດໃນແງ່ຂອງການປະຕິ ບັດຕາມລະບຽບກົດໝາຍ. ຢ່ຂັ້ນປະຕິບັດງານ, RBA ຍັງຖືກນຳມາໃຊ້ເພື່ອສະໜັບສະ ໜຸນວຽກການບໍລິການຜູ້ ເສຍອາກອນ ແລະ ຂະບວນການເກັບລາຍຮັບພາຍໃນລັດຖະ ການສ່ວຍສາອາກອນ.

3.B: ສະໜັບສະໜຸນການຈັດຕັ້ງປະຕິບັດ VAT

25. ການຈັດຕັ້ງປະຕິບັດ VAT ເປັນບຸລິມະສິດສຳລັບ MoF ເພາະຖືວ່າເປັນເຄື່ອງມື ສຳຄັນທີ່ຈະເຮັດໃຫ້ການເກັບລາຍຮັບເພີ່ມຂຶ້ນ. ເພື່ອເປັນບາດກ້າວທຳອິດໃນການຈັດຕັ້ງ ປະຕິບັດກົດໝາຍວ່າດ້ວຍ ອມພ ປີ 2015, ໄດ້ສະໜອງການສະໜັບສະໜຸນ ການຮ່າງ

ຄຳແນະນຳຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ອມພ ປີ 2015 ລະຫວ່າງປີ 2016. ຄຳແນະນຳຖືກຮັບຮອງໃນເດືອນມັງ ກອນ 2017 ແລະ ໄດ້ມີການຈັດກອງປະຊຸມເປີດກວ້າງລະດັບສູງໂດຍການເຂົ້າຮ່ວມຈາກກະຊວງອ້ອມຂ້າງ ແລະ ພາກເອກະຊົນໃນເດືອນມີນາ 2017 ເພື່ອປະກາດໃຊ້ຄຳແນະນຳຈັດຕັ້ງປະຕິບັດຢ່າງເປັນທາງການ. ພາຍຫຼັງການຝຶກອົບຮົມເປັນເວລາ 8 ວັນ ກ່ຽວກັບຄຳແນະນຳຈັດຕັ້ງປະຕິບັດກົດໝາຍວ່າດ້ວຍ ອມພ, ໄດ້ຮ່າງແລະສົ່ງເອກະສານວິຊາການໃຫ້ MoF ໂດຍມີຂໍ້ສະເໜີໃນ ການປັບປຸງກົດໝາຍວ່າດ້ວຍ ອມພ. ຈາກນັ້ນ, GoL ຈຶ່ງຕັດສິນໃຈປັບປຸງກົດໝາຍວ່າດ້ວຍ ອມພ.

ອົງປະກອບ 4: ການສ້າງແຜນປະຕິບັດງານສຳລັບແຜນງານປະຕິຮູບ PFM ແບບຮອບດ້ານ

26. ແຜນງານ PFM ໄດ້ສະໜັບສະໜຸນກອງປະຊຸມໜ່ວຍງານວິຊາການດ້ານການປະຕິຮູບງົບປະມານ (B-CoP) ຂອງເຄືອຂ່າຍການຄຸ້ມຄອງລາຍຈ່າຍພາກລັດປະຈຳພາກພື້ນອາຊີ (PEMNA) ຢ່ນະຄອນຫຼວງວຽງຈັນໃນວັນທີ 27-29 ເດືອນພະຈິກ 2017. ກອງປະຊຸມດັ່ງກ່າວໄດ້ເຕົ້າໂຮມເອົາບັນດາຜູ້ເຮັດວຽກຕົວຈິງກ່ຽວກັບການປະຕິຮູບວຽກງົບປະມານຈາກ 11 ປະເທດ (ບຣູ ໄນ, ກຳປູເຈຍ, ອິນໂດເນເຊຍ, ສ. ເກົາຫຼີ, ມາເລເຊຍ, ມົງໂກລີ, ມຽນມາ, ຟີລິບປິນ, ໄທ, ຫວຽດນາມ ແລະ ສປປ ລາວ). ໃນກອງປະຊຸມໄດ້ສະໜອງການແປພາສາລາວ ແລະ ນີ້ເປັນການເປີດກວ້າງໃຫ້ພະນັກງານລັດຫຼາຍຂຶ້ນມີໂອກາດເຂົ້າຮ່ວມກອງປະຊຸມ.

27. ໃນເບື້ອງຕົ້ນວຽກງານຈັດຊື້ບໍ່ຖືກກຳນົດໄວ້ເປັນກິດຈະກຳຂອງແຜນງານ ແຕ່ພາຍຫຼັງເຫັນຄວາມຈຳເປັນຕ້ອງສະໜັບສະໜຸນວຽກນີ້ ປະກອບກັບເວລາຮ່າງແຜນປະຕິບັດງານສຳລັບຍຸດທະສາດ PFM ຂອງ MoF ແຜນງານນີ້ໄດ້ໃຫ້ການສະໜັບສະໜຸນການຮ່າງກົດໝາຍວ່າດ້ວຍການຈັດຊື້ດ້ວຍທຶນຂອງລັດ ແລະ ນິຕິກຳລຸ່ມກົດໝາຍທີ່ກ່ຽວຂ້ອງ. ພາຍຫຼັງທີ່ NA ຜ່ານກົດໝາຍ ວ່າດ້ວຍການຈັດຊື້ດ້ວຍທຶນຂອງລັດໃນ ເດືອນ ພະຈິກ 2017, GoL ໄດ້ເລີ່ມດຳເນີນການສ້າງຂອບນິຕິກຳຄຸ້ມຄອງວຽກງານການຈັດຊື້ທີ່ເຂັ້ມແຂງ. ເພື່ອຕອບສະໜອງຕາມການສະເໜີຈາກ MoF ໃນເດືອນທັນວາ 2017 ແຜນງານ PFM ໄດ້ເລີ່ມໃຫ້ການສະໜັບ ສະໜຸນດ້ານວິຊາການແລະຄຳເຫັນຕໍ່ຮ່າງກົດໝາຍວ່າ

ດ້ວຍການຈັດຊື້ດ້ວຍທຶນຂອງລັດ ແລະ ນິຕິກຳຈັດຕັ້ງປະຕິບັດກົດໝາຍ. ມີການໃຫ້ສະໜັບສະໜຸນການສ້າງກົດໝາຍໃຫ້ສຳເລັດ ແລະ ການຮ່າງນິຕິກຳຈັດຕັ້ງປະຕິບັດກົດໝາຍ. ຫຼັງຈາກນິຕິກຳຈັດຕັ້ງປະ ຕິບັດຖືກຮັບຮອງຈາກ MoF ແລ້ວ ຂອບນິຕິກຳການຈັດຊື້ໃໝ່ກໍ່ຈະຖືກຈັດຕັ້ງປະຕິບັດໃນຂອບເຂດທົ່ວປະເທດ.

ມີຫຼາຍບົດຮຽນທີ່ຖອດຖອນໄດ້ຈາກການປະຕິຮູບ PFM ໃນ 2-3 ປີຜ່ານມາຢູ່ ສປປ ລາວ:

- ພາຍໃຕ້ທິດຊີ້ນຳຈາກການນຳຂັ້ນສູງແລະຄວາມທ້ຳມເທຂອງວິຊາການຫຼາກຫຼາຍລະດັບ ຂອງລັດຖະບານຕໍ່ແຜນງານປະຕິຮູບ ຈຶ່ງສາມາດຈັດຕັ້ງປະຕິບັດແຜນງານຢ່າງມີໝາກຜົນ. ແຜນງານດັ່ງກ່າວເປັນເວທີສຳຄັນສຳລັບການປຶກສາຫາລືທີ່ມີຄວາມໝາຍລະຫວ່າງຜູ້ໃຫ້ທຶນ ແລະ ລັດຖະບານໃນຂົງເຂດ PFM.
- ການໃຫ້ເວລາທີ່ພຽງພໍຕໍ່ການກ້າວ ຈາກການສ້າງຂອບນິຕິກຳພື້ນຖານ ໄປສູ່ການຈັດຕັ້ງປະຕິບັດມີຄວາມສຳຄັນຫຼາຍ.
- ການເລືອກເອົາມາດຕະການປະຕິຮູບຈຳນວນໜ້ອຍ ແລະ ສຸມໃສ່ຂົງເຂດທີ່ມີຄວາມສາ ມາດພຽງພໍ, ພັນທະສັນຍາຈາກພາກລັດທີ່ກ່ຽວຂ້ອງ ແລະ ຜູ້ສະໜັບສະໜຸນການປະຕິຮູບ ແມ່ນວິທີການທີ່ ໄດ້ຜົນສຸດ.
- ເປັນເລື້ອງທີ່ມີຄວາມສຳຄັນທີ່ຈະຮັບປະກັນໃຫ້ມີບຸກຄະລາກອນທີ່ມີທັກສະ ມີສ່ວນຮ່ວມ ຢ່າງໜັກແໜ້ນໃຫ້ການຈັດຕັ້ງປະຕິບັດໂຄງການ ເພື່ອຈຸດປະສົງ ຂອງການສ້າງຂີດຄວາມສາມາດ ແລະ ການຝຶກອົບຮົມຈາກການເຮັດວຽກຕົວຈິງ.
- ຄຽງຄູ່ກັບການສະໜອງທຶນ ແລະ TA ຈາກຜູ້ໃຫ້ທຶນແລ້ວ, ການຮ່ວມມືກັນໄລຍະຍາວ ລະຫວ່າງ GoL ແລະ ບັນດາ ຜູ້ໃຫ້ທຶນໄດ້ກາຍເປັນສິ່ງອຳນວຍຄວາມສະດວກຕໍ່ຂະບວນການຂ້າມຜ່ານຂອງປະເທດ ເພື່ອກ້າວໄປສູ່ລະບົບ PFM ທີ່ທັນສະໄໝ. ການສະໜັບສະໜຸນດ້ວຍຮູບການຂອງຜູ້ຊ່ຽວຊານຕ່າງປະເທດ ແລະ ໂອກາດເຂົ້າເຖິງເຄືອ ຂ່າຍຜູ້ປະຕິບັດວຽກຕົວຈິງແລະປະສົບການລະດັບພາກພື້ນ ແລະ ສາກົນກາຍເປັນການປູທາງໃຫ້ແກ່ຂະບວນການທັນເປັນທັນສະໄໝ.
- ການສະໜັບສະໜຸນແບບຕິດແທດ, ການຕິດຕາມແບບເປັນປົກກະຕິນັ້ນ ແລະ ການມີທີມງານວິຊາການປະຈຳຕໍ່ເນື່ອງ ໃນປະເທດໄດ້ກາຍເປັນປັດໃຈສຳຄັນຕໍ່ຜົນສຳເລັດ.

- ການເຮັດວຽກຮ່ວມກັນແບບເປີດກວ້າງ ແລະ ໂປ່ງໃສລະຫວ່າງສະຫະພາບເອີຣົບ, ທະນາຄານໂລກ ແລະ GoL ລະຫວ່າງການຈັດຕັ້ງປະຕິບັດແຜນງານໄດ້ຊ່ວຍໃຫ້ສາມາດແກ້ໄຂສິ່ງທ້າທາຍຕ່າງໆ ແລະ ຮັບປະກັນໃຫ້ປະຕິບັດກິດຈະກຳຂອງ ແຜນງານໄດ້ຢ່າງຄ່ອງແຄ້ວ.
- ຍ້ອນຂະແໜງ PFM ບັນລຸໄດ້ໝາກຜົນອັນດີ ຈຶ່ງເຮັດໃຫ້ຜູ້ໃຫ້ທຶນອື່ນສົນໃຈໃນຂະແໜງການດັ່ງກ່າວ ສະນັ້ນ GoL ຈຶ່ງຕ້ອງຮັບປະກັນໃຫ້ມີການປະສານງານການຊ່ວຍເຫຼືອເປັນຢ່າງດີ ແລະ ມີການແບ່ງຄວາມຮັບຜິດຊອບທີ່ຈະແຈ້ງ. ໃນທາງກັບກັນ, ບັນດາຜູ້ໃຫ້ທຶນຈະຈຳເປັນຕ້ອງປັບປຸງກົນໄກການປະສານງານໃນຂົງເຂດ PFM ໃນ ສປປ ລາວ ເພື່ອຫຼີກລ່ຽງວຽກແລະກິດຈະກຳຊ້ຳຊ້ອນກັນ.

ການເຮັດວຽກກັບ GoL ຢ່າງແຂງຂັນໃນໄລຍະໃໝ່ຕະຫຼອດໄລຍະສອງປີຜ່ານມາ ເຮັດໃຫ້ສາຍພົວພັນສະໜິດແໜ້ນຂຶ້ນ ລະຫວ່າງຄູ່ຮ່ວມພັນທະນາ ແລະ MoF. ການສະໜອງ TA ແລະ ກິດຈະກຳສ້າງຂີດຄວາມສາມາດ ໄດ້ດຳເນີນຢ່າງສຳເລັດຜົນ ແລະ ໄດ້ຮັບການຕອບຮັບເປັນຢ່າງດີຈາກການຈັດຕັ້ງ ພາກລັດ. ແຜນງານ TF ປັດຈຸບັນມີຈຸດສຸມແນໃສ່ການເກັບກຳຂໍ້ມູນກ່ຽວກັບລະບຽບຂັ້ນຕອນປັດຈຸບັນ, ວຽກການວິໄຈ ແລະ ການສ້າງຂີດຄວາມສາມາດ ຊຶ່ງສະແດງອອກດ້ວຍການຈັດກິດຈະກຳການຝຶກອົບຮົມ ປະມານ 20 ກິດຈະກຳ ແລະ ການສ້າງເອກະສານວິຊາການ, ບົດລາຍງານຂອງຄະນະຜູ້ຊ່ຽວຊານ ແລະ ແຜນປະຕິບັດງານ 40 ສະບັບ.

ອີງໃສ່ວຽກພື້ນຖານທີ່ສ້າງຂຶ້ນມາຢ່າງແໜ້ນໜາ, ໂດຍປະສານສົມທົບກັບ MoF ໄດ້ສ້າງອາລະການປະຕິຮູບ ແລະ ແຜນປະຕິບັດງານທີ່ຊັດເຈນ ແລະ ນີ້ໄດ້ກາຍເປັນພື້ນຖານສຳຄັນໃຫ້ແກ່ MoF ເພື່ອຈັດຕັ້ງປະຕິບັດຍຸດທະສາດ PFM ໃຫ້ກ້າວໄປ. ຖານຄວາມຮູ້ທີ່ໄດ້ຮັບການພັດທະນາເປັນຢ່າງດີ. ເຖິງຢ່າງໃດກໍ່ຕາມ, ການຈັດຕັ້ງປະຕິບັດການປະຕິຮູບພາຍໃຕ້ແຜນງານ TF ໃໝ່ນັ້ນຮຽກຮ້ອງຕ້ອງການຂີດຄວາມສາມາດ ແລະ ການຝຶກອົບຮົມຫຼາຍຂຶ້ນ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກກະກຽມ ສຳລັບການປະຕິຮູບໃຫ້ສຳເລັດຜົນແລະມີປະສິດທິຜົນ ເພື່ອກ້າວສູ່ການຈັດຕັ້ງປະຕິບັດການປະຕິຮູບ ແລະ ສຳຄັນກວ່ານັ້ນແມ່ນເຮັດໃຫ້ການປະຕິຮູບປະກົດຜົນເປັນຈິງ. ມີອົງປະກອບຈຳນວນໜຶ່ງຢູ່ແລ້ວ ເຊັ່ນ: ຂອບການຄຸ້ມຄອງ, ການຄຸ້ມຄອງງົບປະມານແລະຄັງເງິນຂັ້ນພື້ນຖານ ແລະ ຄວາມຮັບຜິດຊອບຕໍ່ໜ້າວຽກແມ່ນມີຢູ່ແລ້ວ ແຕ່ຕ້ອງກຳນົດເປົ້າໝາຍການ ສະໜັບສະໜຸນໃຫ້ຊັດເຈນເພື່ອຮັບປະກັນ ຄວາມຍືນຍົງ.

ບາດກ້າວໃນຕໍ່ໜ້າ

ແຜນງານປະຕິຮູບ PFM ໄລຍະສອງ (ທີ່ໄດ້ຮັບການສະໜອງທຶນຈາກ EU ແລະ ຈັດຕັ້ງປະຕິບັດໂດຍທະນາຄານໂລກ) ກຳລັງຢູ່ໃນຂັ້ນຕອນການກະກຽມ ແລະ ຈະສືບຕໍ່ໃຫ້ການສະໜັບສະໜຸນ GoL ໃນການຈັດຕັ້ງປະຕິບັດຍຸດທະສາດ PFM. ຄາດວ່າຈະ

ສາມາດເລີ່ມປະຕິບັດແຜນງານ PFM ທີ່ໄດ້ຮັບການສະໜອງທຶນຈາກ EU ໃນມູນຄ່າ €5 ລ້ານ ແລະ ມີໄລຍະເວລາຈັດຕັ້ງປະຕິບັດ 4 ປີ ຕັ້ງແຕ່ທ້າຍປີ 2018 ເປັນຕົ້ນໄປ. ແຜນງານ PFM ໃໝ່ຈະປະກອບດ້ວຍ 2 ຄື: ໂຄງການທີ່ຄຸ້ມຄອງໂດຍທະນາຄານໂລກ ແລະ ໂຄງການທີ່ຄຸ້ມຄອງໂດຍພາກລັດ ຊຶ່ງໂຄງການທີ່ຄຸ້ມຄອງໂດຍທະນາຄານໂລກນັ້ນ ຈະສະໜອງ TA ແລະ ການບໍລິການໃຫ້ຄຳປຶກສາ ໂດຍນຳໃຊ້ວິຊາການຂອງທະນາຄານໂລກ ແລະ ຄວາມຊ່ຽວຊານຂອງສາກົນ ໃນຂະນະທີ່ໂຄງການຊ່ວຍເຫຼືອລ້າທີ່ຄຸ້ມຄອງໂດຍພາກລັດຈະສະໜັບສະໜຸນບັນດາກິດຈະກຳ ໃນການຈັດຕັ້ງປະຕິບັດນະໂຍບາຍຂອງ GoL.

ແຜນງານ SDTF ໃໝ່ຈະສືບຕໍ່ສະໜັບສະໜຸນການຈັດຕັ້ງປະຕິບັດຍຸດທະສາດ ຂອງ PFM ຂອງ MoF ລວມທັງການຈັດຕັ້ງປະຕິບັດກົດໝາຍວ່າດ້ວຍງົບປະມານແຫ່ງ ລັດ ສະບັບປັບປຸງໃນປີ 2015 ແລະ ກົດໝາຍວ່າດ້ວຍການຈັດຊື້ດ້ວຍທຶນຂອງລັດ, ການ ປະຕິຮູບວຽກຄັງເງິນ, ແລະ ບາງກິດຈະກຳທີ່ກຳນົດໄວ້ໃນຍຸດທະສາດ ICT. ນອກນັ້ນ, ກໍ່ຍັງຈະສະໜັບສະໜຸນການເຮັດສຳເລັດ ແລະ ເຜີຍແຜ່ບົດລາຍງານ PEFA 2018 ແລະ ຈັດການປະເມີນຄືນ PEFA ຄາດວ່າຈະເກີດຂຶ້ນໃນ 2021. ຈະສອງໜອງການ ສະໜັບສະໜຸນໃຫ້ແກ່ກົມສ່ວຍສາອາກອນໃນຂົງເຂດການຄຸ້ມຄອງຜູ້ເສຍອາກອນ ລາຍໃຫຍ່ ແລະ MoHA ໃນການຂັນຂະຫຍາຍລະບົບຄຸ້ມຄອງຂໍ້ມູນລັດຖະກອນ.

ແຜນງານ SDTF ໃໝ່ທີ່ກຳລັງກະກຽມ ແລະ ຈະໄດ້ຮັບການຈັດຕັ້ງປະຕິບັດໄປຄຽງຄູ່ ກັບໂຄງການທີ່ໄດ້ຮັບທຶນຈາກທະນາຄານໂລກ ຊຶ່ງກໍ່ຄືໂຄງການຫັນເປັນທັນສະໄໝການ ຄຸ້ມຄອງການເງິນພາກລັດ (PFM). ໂຄງການດັ່ງກ່າວຈະສຸມໃສ່ການລົງທຶນໃນລະບົບ FMIS ໃໝ່ ແລະ ການປັບປຸງຫຼັກສູດການຝຶກອົບຮົມ.

CUSTOMS

TOYOTA

Contents

Executive Summary 7

I. Introduction 11

Country Context 11

PFM Reforms in Lao PDR 12

The Public Finance Management (PFM) Modernization Program ... 12

II. Activities Implemented under the Program 15

Component 1: Public Finance Development Strategy and Other PFM Reforms 16

1.A: Public Finance Development Strategy to 2025 16

1.B: Public Expenditure Finance and Accountability (PEFA) Assessment 18

1.C: Cybersecurity and ICT Strategy 18

1.D: State Audit Organization (SAO) self-assessment 18

Component 2: Support Strengthening the Budget Preparation and Execution Processes 19

2.A: Technical assistance (TA) for improvement of budget preparation processes 19

2.B: Improved budget execution, including cash management, forecasting, and reporting 20

2.C: Review and improvement of the treasury and budget information systems 21

2.D: Strengthen the role of the National Assembly in the budget preparation process 22

Component 3: Support Revenue Policy and Management 23

3.A: Institutionalize and strengthen the Large Taxpayers Unit (LTU) through capacity building 23

3.B: Support to VAT Implementation 25
Component 4: Preparation of an Action Plan for Comprehensive PFM Reform 25
III. Lessons Learned 27
IV. Conclusions and Next Steps 29
Next Steps 29

Acknowledgements

